# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ມິຖຸນາ 2026
ປີທີ 15
ສະບັບທີ 1068


## ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຜູ້ບັນຊາການທະຫານສູງສຸດໄທ



(ສພຊ) - ວັນທີ 5 ມິຖຸນານີ້, ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ພົອ. ອຸກຣິດ ບຸນຕານົນ ຜູ້ບັນຊາການທະຫານສູງສຸດ ແຫ່ງ ລາຊະອານາຈັກໄທ ພ້ອມດ້ວຍຄະນະ ເນື່ອງໃນໂອກາດທີ່ເດີນທາງມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມລະຫວ່າງຫົວໜ້າກົມໃຫຍ່ເສນາທິການກອງທັບປະຊາຊົນລາວ

ອ່ານຕໍ່ໜ້າ 8



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນໍາທີ່ປະຊາຊົນເຄົາລົບຮັກ

ເງື່ອນໄຂປັດຈຸບັນນີ້ ການສຶກສາບໍ່ພຽງແຕ່ເປັນເງື່ອນໄຂອັນຈຳເປັນ, ຫາກຍັງເປັນສາເຫດອັນຕົ້ງໜ້າແຫ່ງການປ່ຽນແປງປະຕິວັດທາງດ້ານວິທະຍາສາດ-ເຕັກນິກ ແລະ ຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວອີກດ້ວຍ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 11)

ອ່ານຕໍ່ສະບັບໜ້າ

## ສານຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສປປລາວ ເຖິງເດັກລາວບັນດາເຜົ່າ



- ບັນດາທ່ານທີ່ນັບຖື,
- ຫຼານນ້ອຍອະນຸຊົນ, ເຍົາວະຊົນ ແລະ ເດັກລາວບັນດາເຜົ່າ ທີ່ຮັກແພງ!

ໃນໂອກາດວັນເດັກສາກົນ ວັນທີ 1 ມິຖຸນາ 2026 ທີ່ໄດ້ໝູນວຽນມາບັນຈົບຄົບຮອບ 101 ປີ (1925-2026), ໃນນາມຕາງໜ້າໃຫ້ການນຳພັກ-ລັດ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄວາມຮັກແພງ, ຄວາມຫ່ວງໃຍ ແລະ ຄຳອວຍພອນອັນປະເສີດມາຍັງລູກຫຼານອະນຸຊົນ, ເຍົາວະຊົນ ແລະ ເດັກລາວບັນດາເຜົ່າທຸກຄົນທັງພາຍໃນປະເທດ ແລະ ເດັກລາວທີ່ສຶກສາຮ່ຳຮຽນ ແລະ ອາໄສຢູ່ຕ່າງປະເທດ.

ການສະເຫຼີມສະຫຼອງວັນເດັກສາກົນ 1 ມິຖຸນາໃນທຸກປີ ເປັນວັນແຫ່ງຄວາມສຸກ ແລະ ຄວາມເບີກບານມ່ວນຊື່ນຂອງເດັກ, ທັງເປັນໂອກາດທີ່ທົ່ວສັງຄົມໄດ້ຮ່ວມກັນທົບທວນ ແລະ ຢືນຢັນຄວາມສຳຄັນຂອງການສົ່ງເສີມ ແລະ ປົກປ້ອງສິດທິເດັກ, ສ້າງສະພາບແວດລ້ອມທີ່ປອດໄພ, ອົບອຸ່ນ ແລະ ເປັນມິດເພື່ອໃຫ້ເດັກທຸກຄົນ ໄດ້ເຕີບໃຫຍ່ຢ່າງມີຄຸນນະພາບ. ເດັກນ້ອຍທຸກຄົນ ແມ່ນຄວາມຫວັງ, ແມ່ນກຳລັງສຳຄັນ ແລະ ອະນາຄົດຂອງຊາດ, ເປັນຜູ້ສືບທອດ ແລະ ເປັນກຳລັງຫຼັກແຫຼ່ງ ໃນ

ອ່ານຕໍ່ໜ້າ 5




## ນາງ ສູນທອນ ໄຊຍະຈັກ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງຊົນນະບູລີ



ອ່ານຕໍ່ໜ້າ 8

## ຮອງປະທານ ສພຊ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງປາກຊັນ



ອ່ານຕໍ່ໜ້າ 5

## ສ້າງຄວາມເຂັ້ມແຂງໃຫ້ຊາວໜຸ່ມ ເພື່ອການເຕີບໂຕແບບກອມລອມ



(ສພຊ) - ກອງປະຊຸມສະມາຊິກລັດຖະສະພາພາກພື້ນຂອງອົງການສະມາຊິກລັດຖະສະພາອາຊີ ເພື່ອສົ່ງເສີມວຽກງານປະຊາກອນ ແລະ ການພັດທະນາ (Asian Forum of Parliamentarians on

ອ່ານຕໍ່ໜ້າ 6

## ປະທານກຳມາທິການການຕ່າງປະເທດ ຮັບການເຂົ້າຢ້ຽມຂໍ່ານັບຂອງທູດຝຣັ່ງ



ອ່ານຕໍ່ໜ້າ 5

**ຊົມເຊີຍ ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ (1 ມິຖຸນາ 2026) ຢ່າງສຸດໃຈ!**

# ພົບປະຢ້ຽມຢາມປະຊາຊົນ 2 ບ້ານຕາແສງຈຸນລາ




(ສພຊ) - ວັນທີ 3-4 ມິຖຸນານີ້, ທ່ານ ຈັນທະບູນ ສຸກອາລຸນ ປະທານກຳມາທິການເສດຖະກິດ ແລະ ການເງິນ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ, ທ່ານ ສຸພົນ ໄຊສະຫງ່າ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງທ່າແຕງ ແລະ ທ່ານ ບຸນເລີຍ ນັນທະວົງ ເລຂາພັກເມືອງ, ຫົວໜ້າຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງທ່າແຕງ ພ້ອມດ້ວຍຄະນະຕິດຕາມ ໄດ້ລົງພົບປະຢ້ຽມຢາມພໍ່ແມ່ປະຊາຊົນຢູ່ 2 ບ້ານຂອງຕາແສງຈຸນລາ ຄື: ຈຸນລາ ແລະ ຍືບໃໝ່ ໂດຍມີບັນດາທ່ານປະທານ-ຮອງປະທານຄະນະກຳມະການປົກຄອງຕາແສງ, ຕາງໜ້າຫ້ອງການ, ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການພົບປະ, ໄດ້ຮັບຟັງການລາຍງານຈາກອົງການປົກຄອງສອງບ້ານໂດຍສັງເຂບ; ຈາກນັ້ນ, ສສຊ-ສສຂກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງເຊກອງ ຊຸດທີ V ທັງມີຄຳເຫັນຊີ້ທິດເຍືອງທາງຕໍ່ການພັດທະນາບ້ານ ແລະ ຄອບຄົວ ແລະ ເປີດໂອກາດໃຫ້ພໍ່ແມ່ປະຊາຊົນສະເໜີຂໍ້ຂ້ອງໃຈກ່ຽວກັບບັນຫາຕ່າງໆ ທີ່ຕິດພັນກັບການດຳລົງຊີວິດ ເພື່ອເປັນຂໍ້ມູນໃຫ້ຜູ້ແທນນຳໄປຄົ້ນຄວ້າ, ພິຈາລະນາ ແລະ ນຳສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງອະທິບາຍ-ຊີ້ແຈງ ແລະ ແກ້ໄຂຕາມຄວາມເໝາະສົມ.

ນອກນັ້ນ, ຍັງໄດ້ຢ້ຽມຢາມໂຮງຮຽນປະຖົມສົມບູນບ້ານຍືບໃໝ່ ແລະ ຕິດຕາມກວດກາສະພາບເສັ້ນທາງໄປສູ່ເຂດທຳການຜະລິດຂອງພໍ່ແມ່ປະຊາຊົນບ້ານສະທື ອີກດ້ວຍ.

**(ນາລີວັນ)**



# ຊຸດສຳມະນາໃຫ້ແກ່ສະມາຊິກສະພາລາວ ທີ່ນະຄອນໜານຊາງ



(ສພຊ) - ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຂອງ ສປປລາວ ຈຳນວນ 29 ທ່ານ ນຳໂດຍທ່ານນາງ ວິລະວອນ ພັນທະວົງ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ພ້ອມດ້ວຍຄະນະຕິດຕາມ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາພາຍໃຕ້ຫົວຂໍ້ "ຊຸດສຳມະນາໃຫ້ແກ່ສະມາຊິກສະພາຂອງ ສປປລາວ" ທີ່ນະຄອນໜານຊາງ ແຂວງຈຽງຊີ ສປຈີນ ໃນລະຫວ່າງວັນທີ 15 ພຶດສະພາ - 4 ມິຖຸນາ 2026 ເຊິ່ງຈັດໂດຍກະຊວງການຄ້າ ສປຈີນ.

ຊຸດສຳມະນາດັ່ງກ່າວເປັນການເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງ ສປປລາວ ແລະ ສປຈີນ ໂດຍສະເພາະແມ່ນການຮ່ວມມືໃນຂົງເຂດການພັດທະນາຊັບພະຍາກອນມະນຸດ ເຊິ່ງຜ່ານມາລັດຖະບານຈີນ ໄດ້ສະໜັບສະໜູນທາງດ້ານທຶນຮອນເພື່ອຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ແກ່ ສສຊ, ສສຂ ແລະ ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດລາວ ໃນຫົວຂໍ້ຕ່າງໆ ໂດຍຜ່ານກະຊວງການຄ້າແລະເປັນເຈົ້າພາບຈັດໂດຍພະແນກການຄ້າແຂວງຈຽງຊີແລະວິທະຍາໄລວິຊາຊີບພາສາຕ່າງປະເທດແລະການຄ້າຕ່າງປະເທດ ແຂວງຈຽງຊີ.

ຊຸດສຳມະນາຄັ້ງນີ້ ໄດ້ຮັບຟັງການບັນລະຍາຍຈາກນັກຄົ້ນຄວ້າ ແລະ ສາສະດາຈານຈາກສະຖາບັນການຕ່າງປະເທດຂອງ ສປຈີນ ແລະ ມະຫາວິທະຍາໄລຊີ່ດົງຂອງນະຄອນໜານຊາງ, ແຂວງຈຽງຊີ ກ່ຽວກັບແນວຄິດ ແລະ ຜົນສຳເລັດໃນການປົກຄອງຂອງພັກກອມມູນິດຈີນ, ການກໍ່ສ້າງປະເທດຊາດທີ່ທັນສະໄໝ ແລະ ການປ່ຽນແປງທາງການເມືອງຂອງຈີນ, ການສຶກສາກົນໄກນິຕິບັນຍັດທີ່ນຳໂດຍສະພາຜູ້ແທນປະຊາຊົນທົ່ວປະເທດຈີນ, ການປະຕິຮູບອົງການຂອງລັດຖະບານ, ການພັດທະນາປະເທດຫັນເປັນທັນສະໄໝ, ການຮັບມືກັບວິກິດການສາທາລະນະ, ການແກ້ໄຂໜີ້ສິນ ແລະ ການບໍລິການຈັດຫາງານສາທາລະນະຂັ້ນຮາກຖານຂອງ ສປຈີນ; ຜ່ານການເຂົ້າຮ່ວມສຳມະນາ ໄດ້ເຮັດໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຮັບຮູ້ ແລະ ເຂົ້າໃຈບົດຮຽນການພັດທະນາ, ການປະຕິຮູບ, ການປົກຄອງທີ່ດີ ແລະ ເສັ້ນທາງຫັນເປັນທັນສະໄໝຂອງສປຈີນໂດຍສະເພາະແມ່ນການປັບປຸງ ແລະ ຍົກສູງຄຸນນະພາບໃນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

ນອກຈາກນັ້ນ, ຄະນະຍັງໄດ້ໄປທັດສະນະສຶກສາ, ເບິ່ງຕົວຈິງຢູ່ສະຖານທີ່ປະຫວັດສາດ, ເຂດວັດທະນະທຳ, ເຂດການຜະລິດ, ເຂດພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຫັນເປັນບ້ານທີ່ທັນສະໄໝ ແລະ ບໍລິສັດຕ່າງໆຈຳນວນໜຶ່ງ.



# ຮຽບຮຽງເນື້ອໃນຮອບດ້ານນິຕິກຳຂອງ ຄປຈສພຊ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນຮອບດ້ານຕໍ່ຮ່າງມະຕິຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ໄດ້ຈັດຂຶ້ນໃນວັນທີ 3-5 ມິຖຸນາ 2026 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນໂດຍການເປັນປະທານຂອງທ່ານ ຄຳສະໄໝ ສຳມາວົງ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ມີບັນດາທ່ານຮອງປະທານກຳມາທິການ, ຮອງຫົວໜ້າຫ້ອງວ່າການ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານທີ່ກ່ຽວຂ້ອງພາຍໃນ ສພຊ ເຂົ້າຮ່ວມ.

ທ່ານ ຄຳສະໄໝ ສຳມາວົງ ກ່າວວ່າ: ເນື້ອໃນທີ່ນຳມາຄົ້ນຄວ້າ, ປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນໃນຄັ້ງນີ້ລ້ວນແຕ່ເປັນນິຕິກຳທີ່ສຳຄັນຂອງຄະນະປະຈຳສະພາແຫ່ງຊາດ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານຕາມລັດຖະທຳມະນູນ, ກົດໝາຍ ກໍຄືໃຫ້ສອດຄ່ອງກັບການປັບປຸງກົງຈັກຂອງສະພາແຫ່ງຊາດ ຊຸດທີ X ເພື່ອເປັນບ່ອນອີງທີ່ສຳຄັນໃຫ້ແກ່ການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກົງຈັກທີ່ເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ກໍຄືແຕ່ລະພາກສ່ວນພາຍໃນສະພາແຫ່ງຊາດ ໄດ້ຢ່າງຄ່ອງຕົວ ແລະ ກົມກຽວກັນ, ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ.

ກອງປະຊຸມຄັ້ງນີ້ໄດ້ສຸມໃສ່ແລກປ່ຽນຄຳເຫັນຕໍ່ເນື້ອໃນຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ X ແລະ ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສະພາແຫ່ງຊາດ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບ, ສຸມສະຕິປັນຍາ ແລະ ປະສົບການ ໃນການຄົ້ນຄວ້າປະກອບຄຳເຫັນໃສ່ແຕ່ລະເນື້ອໃນຂອງນິຕິກຳ ໃຫ້ມີເນື້ອໃນຄົບຖ້ວນ, ລະອຽດຊັດເຈນ, ສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບ ແລະ ສອດຄ່ອງກັບສະພາບຕົວຈິງ.

**(ນາງ ກຸກກິກ ບຸດດາໄຊ)**



# ຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມສັງເກດການເລືອກຕັ້ງທ້ອງຖິ່ນຂອງ ສ.ເກົາຫຼີ




(ສພຊ) - ລະຫວ່າງວັນທີ 29 ພຶດສະພາ - 5 ມິຖຸນາ 2026, ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປລາວ ນຳໂດຍທ່ານ ເພັດລາ ທັນທະວົງສາ ຮອງປະທານກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມໂຄງການສັງເກດການເລືອກຕັ້ງສາກົນ ຂອງການເລືອກຕັ້ງຂັ້ນທ້ອງຖິ່ນພ້ອມກັນທົ່ວປະເທດຄັ້ງທີ 9 ຢູ່ ສາທາລະນະລັດເກົາຫຼີ ຕາມການເຊື້ອເຊີນຂອງຄະນະກຳມະການເລືອກຕັ້ງແຫ່ງຊາດ ຂອງ ສ.ເກົາຫຼີ ເຊິ່ງມີຜູ້ແທນເຂົ້າຮ່ວມທັງໝົດ32ທ່ານ ທີ່ມາຈາກ 11 ປະເທດ ຄື: ອັງໂກລາ, ຈາໄມກາ, ສປປລາວ, ບັງກລາເທດ, ມົງໂກລີ, ຊິມບັບເວ, ພູຖານ, ນິເຊຣີ, ລາຊະອານາຈັກໄທ, ເອກວາດໍ ແລະ ອູແກຣນ.

ການເຂົ້າຮ່ວມສັງເກດການເລືອກຕັ້ງຄັ້ງນີ້ ກໍເພື່ອສຶກສາຄົ້ນຄ້ວາ, ແລກປ່ຽນບົດຮຽນ ແລະ ປະສົບການ ກ່ຽວກັບຂະບວນການ, ກົນໄກ ແລະ ການບໍລິຫານ-ຄຸ້ມຄອງການເລືອກຕັ້ງສະມາຊິກສະພາຂັ້ນທ້ອງຖິ່ນຂອງ ສ.ເກົາຫຼີ; ແລກປ່ຽນຄຳຄິດເຫັນກ່ຽວກັບການເລືອກຕັ້ງກັບບັນດາຜູ້ເຂົ້າຮ່ວມສັງເກດການເລືອກຕັ້ງທີ່ມາຈາກຕ່າງປະເທດທັງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມມີມາແຕ່ດົນນານ ທີ່ກາຍເປັນຄູ່ຮ່ວມຍຸດທະສາດຮອບດ້ານລະຫວ່າງ ສປປລາວ ແລະ ສ.ເກົາຫຼີ ກໍຄືການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ລາວ - ສ.ເກົາຫຼີ ໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ.

ໃນໂອກາດເຂົ້າຮ່ວມສັງເກດການເລືອກຕັ້ງ, ຄະນະຜູ້ແທນໄດ້ຮັບຟັງການສະເໜີກ່ຽວກັບປະຫວັດຄວາມເປັນມາຂອງການເລືອກຕັ້ງໃນແຕ່ລະໄລຍະ, ຂະບວນການເລືອກຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມະການເລືອກຕັ້ງແຫ່ງຊາດ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຄະນະກຳມະການເລືອກຕັ້ງທ້ອງຖິ່ນ, ການພິຈາລະນາຮັບຮອງເອົາຜູ້ສະໝັກຮັບເລືອກຕັ້ງ, ການກຳນົດປະເພດຂອງຜູ້ສະໝັກຮັບເລືອກຕັ້ງ, ການເກັບກຳສະຖິຕິຂອງຜູ້ມີສິດປ່ອນບັດເລືອກຕັ້ງ, ການກຳນົດໜ່ວຍປ່ອນບັດເລືອກຕັ້ງ, ຂັ້ນຕອນການລົງຄະແນນສຽງຂອງຜູ້ມີສິດເລືອກຕັ້ງ, ການນັບຄະແນນ, ການປະກາດຜົນການເລືອກຕັ້ງ ແລະ ບັນຫາອື່ນໆ; ພາຍຫຼັງຮັບຟັງການສະເໜີກ່ຽວກັບວຽກງານການເລືອກຕັ້ງແລ້ວ, ຄະນະຜູ້ແທນກໍໄດ້ຈັດແບ່ງເປັນກຸ່ມໃນການລົງໄປເບິ່ງຕົວຈິງຈຸດການປ່ອນບັດເລືອກຕັ້ງລ່ວງໜ້າກ່ອນວັນເລືອກຕັ້ງ ຢູ່ເມືອງກາງບຸກ ນະຄອນຫຼວງເຊອູນ, ການໂຄສະນາຫາສຽງດ້ວຍການຕິດປ້າຍ, ການນຳໃຊ້ລົດແລ່ນໂຄສະນາ ແລະ ຕິດຕັ້ງສະຖານທີ່ຫາສຽງຂອງຜູ້ສະໝັກຮັບເລືອກຕັ້ງ. ຈາກນັ້ນ, ໄດ້ໄປທັດສະນະສຶກສາແລະຮຽນຮູ້ເຖິງປະຫວັດຄວາມເປັນມາຂອງຂະບວນການເລືອກຕັ້ງ, ແຜນວາດການກຳນົດໜ່ວຍເລືອກຕັ້ງ, ການໃຊ້ສິດປ່ອນບັດ, ເຄື່ອງມືອຸປະກອນການນັບບັດລົງຄະແນນສຽງ, ຫ້ອງຈຳລອງການເລືອກຕັ້ງ, ເວທີປະກາດການເລືອກຕັ້ງ, ຫ້ອງບັນຊາການ ແລະ ຄວບຄຸມສະພາບການເລືອກຕັ້ງແບບທັນກັບສະພາບຕົວຈິງຢູ່ສຳນັກງານໃຫຍ່ຂອງຄະນະກຳມະການເລືອກຕັ້ງລະດັບຊາດ; ພ້ອມດຽວກັນ, ຄະນະຜູ້ແທນຍັງໄດ້ຮັບຟັງການສະເໜີວຽກງານການໂຄສະນາເຜີຍແຜ່, ການປຸກລະດົມມວນຊົນ, ການສຶກສາອົບຮົມ ແລະ ການປູກຈິດສຳນຶກກ່ຽວກັບຄວາມຮັບຮູ້ເຂົ້າໃຈຕໍ່ການເລືອກຕັ້ງ ເຊິ່ງແມ່ນສະຖາບັນການສຶກສາພົນລະເຮືອນເພື່ອປະຊາທິປະໄຕຂອງ ສ.ເກົາຫຼີ ເປັນຜູ້ຮັບຜິດຊອບວຽກງານດັ່ງກ່າວນີ້.

ວັນທີ 3 ມິຖຸນາ ເຊິ່ງເປັນວັນເລືອກຕັ້ງຕົວຈິງ, ຄະນະຜູ້ແທນທັງໝົດ ໄດ້ແບ່ງກຸ່ມກັນໄປສັງເກດການປ່ອນບັດແບບປິດລັບຂອງຜູ້ມີສິດເລືອກຕັ້ງເພື່ອເລືອກເອົາຕົວແທນຂອງຕົນໄປປະຕິບັດໜ້າທີ່ແທນໃນສະພາປະຊາຊົນ, ອົງການບໍລິຫານ-ການປົກຄອງ ແລະ ຂະແໜງການສຶກສາຂັ້ນທ້ອງຖິ່ນ ໂດຍມີການລົງຄະແນນສຽງເລືອກເອົາ 7 ຕຳແໜ່ງຄື: 1. ຫົວໜ້າລັດຖະບານທ້ອງຖິ່ນຂັ້ນນະຄອນ (ເຈົ້າຄອງນະຄອນ ແລະ ເຈົ້າແຂວງ), 2. ສະມາຊິກສະພານະຄອນ (ແບບປະຈຳເຂດເລືອກຕັ້ງ), 3. ສະມາຊິກສະພານະຄອນ (ແບບແບ່ງສັດສ່ວນເລືອກເອົາພັກການເມືອງ), 4. ຫົວໜ້າລັດຖະບານທ້ອງຖິ່ນຂັ້ນພື້ນຖານ (ເຈົ້າເມືອງ, ຕາແສງ, ບ້ານ), 5. ສະມາຊິກສະພາທ້ອງຖິ່ນຂັ້ນພື້ນຖານ (ປະຈຳເຂດເລືອກຕັ້ງ), 6. ສະມາຊິກສະພາທ້ອງຖິ່ນຂັ້ນພື້ນຖານ (ແບບແບ່ງສັດສ່ວນເລືອກເອົາພັກການເມືອງ) ແລະ 7. ຜູ້ອຳນວຍການຂອງຂະແໜງການສຶກສາຂັ້ນທ້ອງຖິ່ນ.

ຕອນຄ່ຳຂອງວັນດຽວກັນ, ຄະນະຜູ້ແທນທັງໝົດ ໄດ້ເຂົ້າຮ່ວມການໄປສັງເກດການນັບຄະແນນສຽງຕົວຈິງຢູ່ສູນນັບຄະແນນສຽງຂອງເມືອງກັງແຊນະຄອນຫຼວງເຊອູນ ເຊິ່ງໄດ້ເຫັນຄວາມເປັນຈິງຂອງພາບລວມຂອງການປະຕິບັດໜ້າທີ່ວຽກງານຂອງຄະນະກຳມະການເລືອກຕັ້ງແຫ່ງຊາດ, ລະດັບແຂວງ, ລະດັບທ້ອງຖິ່ນ, ການນຳໃຊ້ພະນັກງານ ແລະ ເຄື່ອງຈັກທີ່ທັນສະໄໝໃນການນັບຄະແນນສຽງ, ການເກັບຮັກສາບັດລົງຄະແນນສຽງ, ການເຂົ້າຮ່ວມເປັນສັກຂີພະຍານໃນການນັບຄະແນນຂອງຕົວແທນຈາກພັກ, ຕົວແທນຂອງຜູ້ລົງສະໝັກ, ສື່ມວນຊົນ, ການຕິດກ້ອງວົງຈອນປິດ ແລະ ປະກາດຜົນການນັບຄະແນນສຽງໃນເບື້ອງຕົ້ນແບບທັນທີທັນໃດ ກ້າວໄປເຖິງການປະກາດຜູ້ຊະນະການເລືອກຕັ້ງຢ່າງເປັນທາງການ.

ການເຂົ້າຮ່ວມສັງເກດການເລືອກຕັ້ງຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ສັງເກດເຫັນວ່າ ການເລືອກຕັ້ງຂັ້ນທ້ອງຖິ່ນໃນເທື່ອນີ້ ດຳເນີນໄປດ້ວຍຄວາມເປັນລະບົບລະບຽບຮຽບຮ້ອຍດີ ແລະ ໄດ້ຮັບຜົນສຳເລັດຢ່າງຈົບງາມ ເນື່ອງຈາກຄະນະກຳມະການເລືອກຕັ້ງລະດັບຊາດ, ລະດັບແຂວງ, ລະດັບທ້ອງຖິ່ນ ໄດ້ກະກຽມການເລືອກຕັ້ງເປັນຢ່າງດີ, ມີປະສິດທິພາບ, ມີການແບ່ງຄວາມຮັບຜິດຊອບທີ່ຊັດເຈນແລະລະອຽດຈະແຈ້ງລະຫວ່າງແຕ່ລະອະນຸກຳມະການ, ໜ່ວຍງານ, ການກຳນົດໜ່ວຍປ່ອນບັດເລືອກຕັ້ງຂອງຜູ້ມີສິດເລືອກຕັ້ງ ໄດ້ຕາມເຈດຈຳນົງຂອງຕົນ ລະຫວ່າງພົນລະເມືອງທີ່ກຳເນີດໃນພື້ນທີ່ ແລະ ພົນລະເມືອງທີ່ຍົກຍ້າຍມາຈາກຖິ່ນອື່ນ, ມີການນຳໃຊ້ອຸປະກອນເອເລັກໂຕຣນິກທີ່ທັນສະໄໝ ເຂົ້າໃນການບໍລິຫານ-ຄຸ້ມຄອງການເລືອກຕັ້ງ, ການພົວພັນປະສານງານຢ່າງເປັນລະບົບຄົບຊຸດ, ການນັບບັດລົງຄະແນນສຽງຢ່າງມີປະສິດທິຜົນ, ວ່ອງໄວ, ມີຄວາມຍຸຕິທຳ, ໂປ່ງໃສ ແລະ ສາມາດກວດກາກວດສອບໄດ້.

ໃນໂອກາດນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ພົບປະເຮັດວຽກກັບປະທານຄະນະມິດຕະພາບລັດຖະສະພາ ສ.ເກົາຫຼີ - ລາວ ໂດຍສອງຝ່າຍ

ອ່ານຕໍ່ໜ້າ 5

# ກຳມາທິການການຕ່າງປະເທດ ແລກປ່ຽນບົດຮຽນກັບສະມາຊິກລັດຖະສະພາເຢຍລະມັນ




(ສພຊ) - ວັນທີ 5 ມິຖຸນາ 2026, ທ່ານ ໂພສີ ເຕັມເມລາດ ຮອງປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ພົບປະເຮັດວຽກຮ່ວມກັບສະມາຊິກລັດຖະສະພາເຢຍລະມັນ ນຳໂດຍທ່ານ ໂທມັດສ໌ ຣັກເຄນ ກຳມະການກຳມາທິການການຕ່າງປະເທດ ແລະ ກຳມາທິການເພື່ອການຮ່ວມມື ແລະ ພັດທະນາເສດຖະກິດ ພ້ອມດ້ວຍຄະນະ ເຊິ່ງຈຸດປະສົງເພື່ອແລກປ່ຽນບົດຮຽນລະຫວ່າງສອງອົງການນິຕິບັນຍັດ ໃນຂົງເຂດວຽກງານການພົວພັນຮ່ວມມືຂອງສອງປະເທດດ້ານເສດຖະກິດ-ການເງິນ, ວັດທະນະທຳ-ສັງຄົມ ແລະ ການຊຸກຍູ້ສົ່ງເສີມດ້ານຕ່າງໆ ລວມເຖິງໂຄງການຊ່ວຍເຫຼືອຈາກຕ່າງປະເທດ.

ໂອກາດດັ່ງກ່າວ, ທ່ານ ໂພສີ ເຕັມເມລາດ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການເດີນທາງມາຢ້ຽມຢາມ ແລະ ເຮັດວຽກທາງການຢູ່ສປປລາວຂອງທ່ານ ໂທມັດສ໌ ຣັກເຄນ ພ້ອມດ້ວຍຄະນະ ໃນຄັ້ງນີ້ ເຊິ່ງເປັນການເສີມຂະຫຍາຍສາຍພົວພັນຮ່ວມມືທີ່ດີ ລະຫວ່າງ ລາວ-ເຢຍລະມັນ ເວົ້າລວມ, ເວົ້າສະເພາະລະຫວ່າງສະພາແຫ່ງຊາດຂອງສອງປະເທດ ໃຫ້ນັບມື້ນັບໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ. ພ້ອມດຽວກັນ, ສອງຝ່າຍກໍໄດ້ແລກປ່ຽນບົດຮຽນ ແລະ ປະສົບການໃນການປະຕິບັດໜ້າທີ່ ແລະ ພາລະບົດບາດການເປັນອົງການນິຕິບັນຍັດ ເປັນຕົ້ນ: ຂັ້ນຕອນການສ້າງ ແລະ ປັບປຸງກົດໝາຍ, ການສ້າງ ແລະ ຮັບຮອງແຜນງົບປະມານແຫ່ງລັດ; ນອກຈາກນັ້ນ, ຝ່າຍເຢຍລະມັນໃຫ້ຄວາມສົນໃຈຕໍ່ບັນດານິຕິກຳຕ່າງໆ ທີ່ຕິດພັນກັບນະໂຍບາຍເພື່ອການກ້າວໄປສູ່ການຫຼຸດພົ້ນຈາກສະຖານະປະເທດດ້ອຍພັດທະນາຂອງ ສປປລາວ ແລະ ຍັງໄດ້ສະແດງຄວາມເປັນຫ່ວງຕໍ່ກັບບັນຫາທີ່ຕິດພັນກັບການຂຸດຄົ້ນບໍ່ແຮ່, ບັນຫາອາຊະຍາກຳທາງໂທລະຄົມ(ສະແກມເມີ), ອາຊະຍາກຳທາງໄຊເບີ ຈາກຕ່າງປະເທດ ທີ່ອາດຈະສົ່ງຜົນກະທົບຕໍ່ສະພາບເສດຖະກິດຂອງລາວ, ບັນຫາປະລະການຮຽນ ແລະ ການແຕ່ງງານກ່ອນໄວອັນຄວນ.

ພ້ອມກັນນີ້, ທັງສອງຝ່າຍຍັງໄດ້ທົບທວນ ແລະ ສັງເກດຕີລາຄາຄືນໝາກຜົນຂອງການຈັດຕັ້ງປະຕິບັດບັນດາໂຄງການຊ່ວຍເຫຼືອຈາກເຢຍລະມັນໃນໄລຍະຜ່ານມາ ໂດຍສະເພາະແມ່ນການສົ່ງເສີມອາຫານທ່ຽງຂອງເດັກໃນໂຮງຮຽນ ແລະ ອື່ນໆ ເຊິ່ງເຫັນໄດ້ຜົນສຳເລັດອັນພົ້ນເດັ່ນ, ດ້ານດີທີ່ຄວນສືບຕໍ່ເສີມຂະຫຍາຍ ແລະ ບັນຫາຄົງຄ້າງທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ.

ໃນຕອນທ້າຍຂອງການພົບປະ, ຄະນະຜູ້ແທນຂອງສອງປະເທດ ໄດ້ສະເໜີໃຫ້ມີການສືບຕໍ່ການຮ່ວມມື ແລະ ແລກປ່ຽນບົດຮຽນກັນຢ່າງປົກກະຕິຕໍ່ເນື່ອງ ເພື່ອຮັດແໜ້ນຄວາມສາມັກຄີເຊິ່ງກັນແລະກັນ.



# ສພຂ ຫົວພັນ ມອບ-ຮັບລົດຖີບໃຫ້ຫຼາຍພາກສ່ວນ



(ສພຂ) ວັນທີ 19 ພຶດສະພາຜ່ານມານີ້, ຢູ່ທີ່ສະພາປະຊາຊົນແຂວງຫົວພັນ ໄດ້ມີພິທີມອບ-ຮັບ ເຄື່ອງໃຊ້ຫ້ອງການ ເປັນຕົ້ນຄອມພິວເຕີຕັ້ງໂຕະ ຈຳນວນ 14 ໜ່ວຍ, ປິນເຕີ ຈຳນວນ 7 ໜ່ວຍ ແລະ ລົດຖີບ ຈຳນວນ 10 ຄັນ; ກ່າວມອບໂດຍ ທ່ານ ນາງ ສວຍເພັດ ທອງສົມບັດ ກຳມະການປະຈຳພັກແຂວງ ຮອງປະທານສະພາປະຊາຊົນແຂວງ ແລະ ຕາງໜ້າກ່າວຮັບຂອງທ່ານ ທົ່ງທອງ ຈັນທາຈິດ ກຳມະການປະຈຳພັກແຂວງ ເລຂາຄະນະບໍລິຫານງານພັກເມືອງຊຳເໜືອ.

ຈຸດປະສົງຂອງການມອບເຄື່ອງຄັ້ງນີ້ ແມ່ນເພື່ອມອບໃຫ້ເມືອງຊຳເໜືອ ໄປມອບຕໍ່ໃຫ້ບັນດາຕາແສງ ຂອງເມືອງຊຳເໜືອເພື່ອເປັນການຊຸກຍູ້ປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ຮັບໃຊ້ເຂົ້າໃນວຽກງານໃຫ້ພະນັກງານ ຂັ້ນຕາແສງໃຫ້ມີປະສິດທິພາບ, ສະດວກໃນການເຮັດວຽກງານຕ່າງໆ ແລະ ລົດຖີບແມ່ນມອບໃຫ້ຫ້ອງການສຶກສາແລະກິລາເມືອງຊຳເໜືອ ໄປມອບຕໍ່ໃຫ້ນັກຮຽນ ທີ່ຮຽນດີ, ຮຽນເກັ່ງ, ທຸກຍາກ ທັງນີ້ກໍເປັນການກະຕຸກຊຸກຍູ້ຂະບວນການຮຽນ-ການສອນຂອງນ້ອງນັກຮຽນໃຫ້ນັບມື້ດີຂຶ້ນ.

ເຄື່ອງທີ່ນຳມາມອບໃນຄັ້ງນີ້ ແມ່ນໄດ້ລະດົມມາຈາກບໍລິສັດ PSL Group Lak, ບໍລິສັດ ກຸ່ມບຸນທະວີຊັບຈຳກັດ ແລະ ບໍລິສັດ ແສງທອງກໍ່ສ້າງເຄຫາສະຖານຂົວທາງ ແລະ ຊົນລະປະທານ ແລະ ສຳລັບ ລົດຖີບແມ່ນໄດ້ຮັບການຊ່ວຍເຫຼືອຈາກມູນນິທິຈີນເພື່ອພັດທະນາຊົນນະບົດ.

ແລະໃນວັນທີ 20 ພຶດສະພາຜ່ານມານີ້, ຢູ່ທີ່ສະພາປະຊາຊົນແຂວງຫົວພັນ ໄດ້ສືບຕໍ່ມອບ-ຮັບລົດຖີບ ຈຳນວນ 15 ຄັນໃຫ້ແກ່ ໂຮງຮຽນ ມສ ຕົວແບບ, ມສ ພັນລາ ແລະ ມສ ພັນຊຳ; ກ່າວມອບໂດຍ ທ່ານ ປອ. ຄອນເສີດ ດອນວິໄຊ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະ ກ່າວຮັບ ຂອງທ່ານຜູ້ຕາງໜ້າຈາກ 3 ໂຮງຮຽນ.

ຈຸດປະສົງຂອງການມອບເຄື່ອງຄັ້ງນີ້ ແມ່ນເພື່ອມອບໃຫ້ 3 ໂຮງຮຽນດັ່ງກ່າວ ໄປມອບຕໍ່ໃຫ້ນັກຮຽນ ຜູ້ທີ່ຮຽນດີ, ຮຽນເກັ່ງ, ທຸກຍາກ ທັງນີ້ກໍເປັນການກະຕຸກຊຸກຍູ້ຂະບວນການຮຽນ-ການສອນຂອງນ້ອງນັກຮຽນໃຫ້ນັບມື້ດີຂຶ້ນ.

ລົດຖີບທີ່ນຳມາມອບແມ່ນໄດ້ຮັບການຊ່ວຍເຫຼືອຈາກມູນນິທິຈີນ ເພື່ອພັດທະນາຊົນນະບົດ.

ແລະ ວັນທີ 21 ພຶດສະພາຜ່ານມາ, ຢູ່ທີ່ ສະພາປະຊາຊົນ ແຂວງຫົວພັນ ໄດ້ສືບຕໍ່ມອບ-ຮັບລົດຖີບ ຈຳນວນ 10 ຄັນໃຫ້ແກ່ ເມືອງຊຳໃຕ້; ກ່າວມອບໂດຍ ທ່ານ ສີສະຫວັດ ທໍ່ຈິງຕົວ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະ ກ່າວຮັບໂດຍ ທ່ານ ສົມສັກສີ ສົມລິຈິດ ຮອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຊຳໃຕ້.

ຈຸດປະສົງຂອງການມອບເຄື່ອງຄັ້ງນີ້ ແມ່ນເພື່ອມອບໃຫ້ເມືອງ ໄປມອບຕໍ່ໃຫ້ນັກຮຽນທີ່ຮຽນດີ, ຮຽນເກັ່ງ, ທຸກຍາກ ທັງນີ້ກໍ່ເປັນການກະຕຸກຊຸກຍູ້ຂະບວນການຮຽນ-ການສອນຂອງນ້ອງນັກຮຽນໃຫ້ນັບມື້ດີຂຶ້ນ.

ລົດຖີບທີ່ນຳມາມອບແມ່ນລົດຖີບມືສອງ ເຊິ່ງໄດ້ຮັບການຊ່ວຍເຫຼືອ ຈາກມູນນິທິຈີນເພື່ອພັດທະນາຊົນນະບົດ.

ໃນວັນທີ 26 ພຶດສະພານີ້, ຢູ່ທີ່ ສະພາປະຊາຊົນແຂວງຫົວພັນ ມອບ-ຮັບລົດຖີບ ຈຳນວນ 5 ຄັນໃຫ້ແກ່ ໂຮງຮຽນສາມັນກິນນອນຊົນເຜົ່າ ແຂວງຫົວພັນ; ກ່າວມອບໂດຍທ່ານສີສະຫວັດ ທໍ່ຈິງຕົວ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະ ກ່າວຮັບໂດຍທ່ານຫຼ້າສຸກັນ ອິນທະວົງ ຮອງອຳນວຍການໂຮງຮຽນສາມັນກິນນອນຊົນເຜົ່າ ແຂວງຫົວພັນ.

ຈຸດປະສົງຂອງການມອບລົດຖີບຄັ້ງນີ້ແມ່ນມອບໃຫ້ໂຮງຮຽນ ໄປມອບຕໍ່ໃຫ້ນ້ອງນັກຮຽນທີ່ທຸກຍາກ, ຮຽນດີ, ຮຽນເກັ່ງ, ເພື່ອເປັນການກະຕຸກຊຸກຍູ້ຂະບວນການຮຽນ-ການສອນຂອງນ້ອງນັກຮຽນໃຫ້ນັບມື້ດີຂຶ້ນ.

ລົດຖີບທີ່ນຳມາມອບແມ່ນໄດ້ຈາກການຊ່ວຍເຫຼືອຂອງມູນນິທິຈີນເພື່ອພັດທະນາຊົນນະບົດ.

ແລະ ວັນທີ 27 ພຶດສະພາຜ່ານມານີ້, ຢູ່ທີ່ ສະພາປະຊາຊົນ ແຂວງຫົວພັນ ໄດ້ສືບຕໍ່ມອບ-ຮັບລົດຖີບ ຈຳນວນ 10 ຄັນໃຫ້ແກ່ເມືອງວຽງໄຊ; ກ່າວມອບໂດຍທ່ານ ສີສະຫວາດ ທໍ່ຈິງຕົວ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະ ຕາງໜ້າຮັບໂດຍທ່ານ ສົມຄິດ ພວງລາສອນ ວິຊາການ ຫ້ອງວ່າການເມືອງວຽງໄຊ.

ຈຸດປະສົງຂອງການມອບເຄື່ອງຄັ້ງນີ້ ແມ່ນເພື່ອມອບໃຫ້ເມືອງ ໄປມອບຕໍ່ໃຫ້ນັກຮຽນທີ່ຮຽນດີ, ຮຽນເກັ່ງ, ທຸກຍາກ ທັງນີ້ກໍ່ເປັນການກະຕຸກຊຸກຍູ້ຂະບວນການຮຽນ-ການສອນຂອງນ້ອງນັກຮຽນໃຫ້ນັບມື້ດີຂຶ້ນ.

ລົດຖີບທີ່ນຳມາມອບແມ່ນໄດ້ຮັບການຊ່ວຍເຫຼືອຈາກມູນນິທິຈີນ ເພື່ອພັດທະນາຊົນນະບົດ.

ໃນວັນທີ 3 ມິຖຸນານີ້, ຢູ່ທີ່ ສະພາປະຊາຊົນ ແຂວງຫົວພັນ ໄດ້ສືບຕໍ່ມອບ-ຮັບລົດຖີບ ຈຳນວນ 5 ຄັນໃຫ້ແກ່ ຄະນະບໍລິຫານງານຊາວໜຸ່ມແຂວງ ກ່າວມອບໂດຍທ່ານປອ. ຄອນເສີດ ດອນວິໄຊ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະກ່າວຮັບໂດຍທ່ານຄຳພວງ ອຳຄາທອງຄຳ ກຳມະການພັກແຂວງ, ກຳມະການສູນກາງຊາວໜຸ່ມ, ເລຂາຄະນະບໍລິຫານງານຊາວໜຸ່ມແຂວງ. ຈຸດປະສົງຂອງການມອບເຄື່ອງຄັ້ງນີ້ ແມ່ນເພື່ອໄປມອບຕໍ່ໃຫ້ນັກຮຽນ ຜູ້ທີ່ຮຽນດີ, ຮຽນເກັ່ງ, ທຸກຍາກ ທັງນີ້ກໍເປັນການກະຕຸກຊຸກຍູ້ຂະບວນການຮຽນ-ການສອນຂອງນ້ອງນັກຮຽນໃຫ້ນັບມື້ດີຂຶ້ນ.

ລົດຖີບທີ່ນຳມາມອບແມ່ນລົດຖີບມືສອງ ໄດ້ຮັບການຊ່ວຍເຫຼືອ ຈາກມູນນິທິຈີນ ເພື່ອພັດທະນາຊົນນະບົດ.

ແລະ ວັນທີ 5 ມິຖຸນາຜ່ານມານີ້, ຢູ່ທີ່ສະພາປະຊາຊົນແຂວງຫົວພັນ ໄດ້ສືບຕໍ່ມອບ-ຮັບລົດຖີບ ຈຳນວນ 9 ຄັນໃຫ້ແກ່ເມືອງແອດ; ກ່າວມອບໂດຍທ່ານສີສະຫວາດທໍ່ຈິງຕົວຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະ ຕາງໜ້າຮັບໂດຍທ່ານຍອດເພັດລໍວັນທອງ ຮອງປະທານກວດກາພັກ-ລັດເມືອງແອດ.

ຈຸດປະສົງຂອງການມອບເຄື່ອງຄັ້ງນີ້ ແມ່ນເພື່ອມອບໃຫ້ເມືອງ ໄປມອບຕໍ່ໃຫ້ນັກຮຽນທີ່ຮຽນດີ, ຮຽນເກັ່ງ, ທຸກຍາກຢູ່ແຕ່ລະໂຮງນຽນທີ່ມີເປົ້າໝາຍ ທັງນີ້ກໍ່ເປັນການກະຕຸກຊຸກຍູ້ຂະບວນການຮຽນ-ການສອນຂອງນ້ອງນັກຮຽນໃຫ້ນັບມື້ດີຂຶ້ນ.



# ພິທີມອບ-ຮັບໜ້າທີ່ປະທານສະພາປະຊາຊົນ ແຂວງໄຊສົມບູນ ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່




(ສພຂ) - ວັນທີ 11 ພຶດສະພານີ້ ທີ່ຫ້ອງປະຊຸມພູເບ້ຍ ເບີ 502 ຂອງຫ້ອງວ່າການແຂວງ ໄດ້ມີພິທີມອບ-ຮັບ ປະທານສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່ ແລະ ປະກາດອອກພັກການ-ຮັບອຸດໜູນບຳນານ ຂອງພະນັກງານການນຳແຂວງ-ສະພາປະຊາຊົນແຂວງໄຊສົມບູນ ຊຸດທີ IV ໂດຍການເຂົ້າຮ່ວມຂອງທ່ານພົຈຕວ. ບົວພັນ ອິນທະປັນຍາ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງໄຊສົມບູນ; ມີຕາງໜ້າຈາກຄະນະພັກ, ຄະນະນຳຂອງແຂວງ ແລະ ບັນດາເລຂາຄະນະພັກ 5 ເມືອງ; ມີຫົວໜ້າ, ຮອງຫົວໜ້າພະແນກການ, ອົງການ ກົມກອງອ້ອມຂ້າງແຂວງແລະລັດວິສາຫະກິດ ຕະຫຼອດຮອດພະນັກງານຂອງສະພາປະຊາຊົນແຂວງແລະພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ທ່ານ ພູຄຳ ແກ້ວວົງໄຊ ຮອງເລຂາໜ່ວຍພັກ, ຮອງຄະນະຈັດຕັ້ງແຂວງ ແຂວງໄຊສົມບູນ ໄດ້ຜ່ານມະຕິຕົກລົງ ຂອງຄະນະປະຈຳພັກແຂວງ ວ່າດ້ວຍການຍົກຍ້າຍ-ຊັບຊ້ອນພະນັກງານ ໂດຍຍົກຍ້າຍ ທ່ານ ນາງ ຄຳສີ ສິດທິວໍລະດາ ກຳມະການປະຈຳພັກແຂວງ, ຫົວໜ້າຄະນະໂຄສະນາອົບຮົມແຂວງ; ທ່ານ ຄົວຈົ້ງ ດຣາເຊັ້ງ ກຳມະການພັກແຂວງ, ປະທານສະຫະພັນກຳມະບານແຂວງ ແລະ ທ່ານ ບຸນກອງ ຊົ່ງປາຢື້ງ ກຳມະການພັກແຂວງ, ຮອງຫົວໜ້າຄະນະຈັດຕັ້ງແຂວງ ໄປຮັບໜ້າທີ່ໃໝ່ຢູ່ສະພາປະຊາຊົນແຂວງ; ຍົກຍ້າຍ ທ່ານ ຄຳເພັດດວງມາລາກຳມະການພັກແຂວງ, ຮອງປະທານກວດກາພັກ-ລັດແຂວງ ໄປຮັບໜ້າທີ່ໃໝ່ ເປັນເລຂາໜ່ວຍພັກ, ຫົວໜ້າຄະນະໂຄສະນາອົບຮົມແຂວງ.

ຈາກນັ້ນ, ທ່ານ ແດງ ປະທຸມທອງ ໄດ້ຜ່ານບົດບັນທຶກມອບ-ຮັບໜ້າທີ່ ລະຫວ່າງປະທານສະພາປະຊາຊົນແຂວງຊຸດທີ IV ກັບປະທານສະພາປະຊາຊົນແຂວງ ຊຸດທີ V; ຈາກນັ້ນ, ກໍໄດ້ລົງນາມເຊັນບົດບັນທຶກມອບ-ຮັບ ວຽກງານຂອງປະທານສະພາປະຊາຊົນແຂວງ ລະຫວ່າງ ທ່ານ ແດງປະທຸມທອງ ປະທານສະພາປະຊາຊົນແຂວງ (ຜູ້ເກົ່າ) ແລະ ທ່ານ ພອຍຄຳ ຮຸ່ງບຸນຍວງປະທານສະພາປະຊາຊົນແຂວງ (ຜູ້ໃໝ່) ຢ່າງເປັນທາງການ.

ນອກນີ້, ຍັງໄດ້ມີພິທີລົງນາມເຊັນບົດບັນທຶກມອບ-ຮັບໜ້າທີ່ ລະຫວ່າງ ທ່ານ ພັທ. ຄຳໝັ້ນ ພິມມະວົງສາ ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ (ຜູ້ເກົ່າ) ແລະ ທ່ານ ພັທ. ຟອງສະໄໝ ຊໍ່ແສງທອງ ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ ( ຜູ້ໃໝ່ ); ທ່ານ ນາງ ຄຳຫຼ້າ ທອງສີວອນ ຮອງປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ ( ຜູ້ເກົ່າ) ແລະ ທ່ານ ບີເຮ່ ປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ ( ຜູ້ໃໝ່ ); ທ່ານ ນາງ ຂັນກາບ ໄຊຍະກຸມມານ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ຜູ້ເກົ່າ) ແລະ ທ່ານ ບຸນກອງ ຊົ່ງປາຢື້ງ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ຜູ້ໃໝ່); ທ່ານ ນາງ ຄຳສີ ສິດທິວໍລະດາ ຫົວໜ້າຄະນະໂຄສະນາອົບຮົມແຂວງ(ຜູ້ເກົ່າ) ແລະ ທ່ານ ຄຳເພັດ ດວງມາລາ ຫົວໜ້າຄະນະໂຄສະນາອົບຮົມແຂວງ(ຜູ້ໃໝ່) ມີການນຳແຂວງ ແລະ ບັນດາຜູ້ທີ່ເຂົ້າຮ່ວມ ເປັນສັກຂີພິຍານໃນຄັ້ງນີ້.

ພ້ອມນັ້ນ, ຍັງໄດ້ປະກາດພະນັກງານການນຳແຂວງອອກພັກການ-ຮັບອຸດໜູນບຳນານ ຄື: ທ່ານ ແດງ ປະທຸມທອງ ສະມາຊິກສະພາແຫ່ງຊາດ ຊຸດທີ IX, ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ທ່ານ ຄຳພູທອນ ວົງພະຈັນ ກຳມະການພັກແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງອະນຸວົງ, ຮອງປະທານສະພາປະຊາຊົນແຂວງ; ທ່ານ ພົອ. ວິໄຊທໍ່ ເພຍຫຼວງຈົ່ງເສີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18, ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ນາງ ຂັນກາບ ໄຊຍະກຸມມານ ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຊຸດທີ IV.

**(ອຳໄພພອນ ແກ້ວວິໄລ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 3-5 ມິຖຸນານີ້, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງປາກຊັນ ແຂວງບໍລິຄຳໄຊ ນຳໂດຍທ່ານ ກອງແກ້ວ ໄຊສົງຄາມ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ທ່ານ ໄຊອຳພອນ ສີຫາວົງ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ແສງອາລຸນ ແສງອາພອນ ເລຂາຄະນະບໍລິຫານງານພັກເມືອງ, ຫົວໜ້າຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງປາກຊັນ ພ້ອມດ້ວຍຄະນະຕິດຕາມ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ສຳນັກງານປົກຄອງເມືອງປາກຊັນ ແລະ ບ້ານປາກປຶງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມຄົ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ V ເຊິ່ງມີພະນັກງານການນຳຫຼັກແຫຼ່ງ, ນາຍ ແລະ ພົນທະຫານ-ຕຳຫຼວດ, ອຳນາດການປົກຄອງບ້ານ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງພາຍໃນບ້ານ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການພົບປະ, ໄດ້ຮັບຟັງການລາຍງານສະພາບລວມຈຸດພິເສດທີ່ຕັ້ງ, ການນຳພາ-ຊີ້ນຳຂອງອົງການປົກຄອງ ແລະ ການພັດທະນາເສດຖະກິດ-ສັງຄົມ ໃນໄລຍະຜ່ານມາ ທັງເປີດໂອກາດໃຫ້ປະຊາຊົນໄດ້ປະກອບຄຳເຫັນ, ສະເໜີບັນຫາທີ່ມີຄວາມສົນໃຈ ແລະ ປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມພາຍໃນບ້ານເຊິ່ງບັນຫາສ່ວນຫຼາຍແມ່ນຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນ: ການປູກຝັງລ້ຽງສັດທີ່ມີຕົ້ນທຶນສູງ, ເສັ້ນທາງການຄົມມະນາຄົມໄປມາຫາສູ່ກັນຍັງມີຄວາມຫຍຸ້ງຍາກ, ລາຄາສິນຄ້າເໜັງຕີງເພີ່ມສູງຂຶ້ນ; ຈາກນັ້ນ, ສສຊ ແລະ ສສຂ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມຄົ້ງປະຖົມມະລຶກຂອງ ສພຊ ແລະ ສພຂ ບໍລິຄຳໄຊ ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມ ພ້ອມທັງອະທິບາຍຊີ້ແຈງກັບທີ່ຕໍ່ບາງຄຳສະເໜີ, ສ່ວນບັນຫາທີ່ພົວພັນກັບຫຼາຍພາກສ່ວນ ຈະນຳໄປຄົ້ນຄວ້າພິຈາລະນາ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຫາວິທີແກ້ໄຂ. ພ້ອມກັນນັ້ນ, ຍັງໄດ້ມີຄຳເຫັນໂອ້ລົມໂດຍເນັ້ນໜັກໃຫ້ອຳນາດການປົກຄອງບ້ານ ແລະ ປະຊາຊົນສືບຕໍ່ຍຶດໝັ້ນຕໍ່ການນຳພາຂອງພັກ-ລັດ, ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ຕາມແນວທາງຂອງພັກ-ລັດ, ຮັກສາມູນເຊື້ອທີ່ຍາດມາໄດ້ໃນທ່າມກາງສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ເພີ່ມທະວີສ້າງເງື່ອນໄຂເສດຖະກິດຄອບຄົວປູກຝັງ, ລ້ຽງສັດ ກຸ້ມຕົນເອງເປັນເຈົ້າຕົນເອງ, ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ, ເຕົ້າໂຮມຄວາມສາມັກຄີປອງດອງເປັນປຶກແຜ່ນແໜ້ນໜາ, ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆຢ່າງເປັນເຈົ້າການໃຫ້ມີຄວາມສະຫງົບປອດໄພ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາບ້ານເມືອງ.

ນອກນັ້ນ, ຍັງໄດ້ລົງຕິດຕາມ, ຊຸກຍູ້ ການປູກພືດກະສິກຳ ແລະ ການລ້ຽງປາ ຂອງຊາວກະຊິກອນບ້ານປາກປຶງ, ໂຄງການກໍ່ສ້າງຕາຝັ່ງເຈື່ອນເທດສະບານເມືອງປາກຊັນ, ໂຄງການພະລັງງານໄຟຟ້າແສງຕາເວັນ ຂອງບໍລິສັດ ອີພີດີແອວ ໂຊລາ ພາວເວີ ຈຳກັດບ້ານກ້ວຍອຸດົມ.

**(ໂສລະຢ້ຳ)**



## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 27 ພຶດສະພາ 2026, ທ່ານ ໂພໄຊ ໄຂຄຳພິທູນ ປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບທ່ານນາງ ເບເນດິກ ເດຊອງ (Bénédicte Deschamps) ເອກອັກຄະລັດຖະທູດຝຣັ່ງ ປະຈຳ ສປປລາວ.

ທ່ານ ໂພໄຊ ໄຂຄຳພິທູນ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍທ່ານເອກອັກຄະລັດຖະທູດ ໃນການປະກອບສ່ວນອັນສຳຄັນເຂົ້າໃນການພົວພັນຮ່ວມມືລະຫວ່າງລາວ-ຝຣັ່ງ; ພ້ອມກັນນີ້, ກໍໄດ້ແຈ້ງໃຫ້ຊາບການເຄື່ອນໄຫວຂອງສະພາແຫ່ງຊາດໃນໄລຍະຜ່ານມາ ກ່ຽວກັບການປັບປຸງໂຄງຮ່າງການຈັດຕັ້ງ ແລະ 3 ພາລະບົດບາດຕົ້ນຕໍຂອງສະພາແຫ່ງຊາດໃນໄລຍະໃໝ່.

ສອງຝ່າຍໄດ້ປຶກສາຫາລື ແລະ ສົນທະນາແລກປ່ຽນກ່ຽວກັບການສົ່ງເສີມວຽກງານເຊິ່ງກັນແລະກັນໃນອະນາຄົດໃນຂົງເຂດຕ່າງໆເປັນຕົ້ນແມ່ນກອງຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA), ກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU), ສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ(APF), ຝຣັ່ງໂກໂຟນີ ແລະ ອື່ນໆ ທີ່ລັດຖະບານຝຣັ່ງໃຫ້ການຊ່ວຍເຫຼືອແກ່ ສປປລາວ.

ໃນຕອນທ້າຍຂອງການພົບປະ, ທ່ານເອກອັກຄະລັດຖະທູດ ໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານປະທານກຳມາທິການການຕ່າງປະເທດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຈະສືບຕໍ່ເປັນຂົວຕໍ່ທີ່ດີໃນການຊຸກຍູ້ການຮ່ວມມືລະຫວ່າງສອງປະເທດ ໃຫ້ເຂົ້າສູ່ລວງເລິກຍິ່ງໆຂຶ້ນ ເວົ້າລວມ, ເວົ້າສະເພາະ ກໍຄືການພົວພັນຮ່ວມມືລະຫວ່າງລັດຖະສະພາຝຣັ່ງ ແລະ ສະພາແຫ່ງຊາດລາວ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ.

## ສານ...

(ຕໍ່ຈາກໜ້າ 1)

ການພັດທະນາປະເທດໃນອະນາຄົດ. ດັ່ງນັ້ນ, ການດູແລປົກປ້ອງເດັກ ແລະ ສ້າງໂອກາດໃຫ້ເດັກ ຈຶ່ງເປັນຄວາມຮັບຜິດຊອບຮ່ວມກັນຂອງທຸກຄົນໃນສັງຄົມ.

ສຳລັບ ສປປລາວ, ການສະເຫຼີມສະຫຼອງວັນເດັກສາກົນ ໄດ້ດຳເນີນຄຽງຄູ່ກັບວັນປູກຕົ້ນໄມ້ແຫ່ງຊາດ ແມ່ນເພື່ອປູກຝັງໃຫ້ເດັກມີຄວາມຮັບຜິດຊອບ, ຮັກໃນການປົກປັກຮັກສາທຳມະຊາດ ແລະ ສິ່ງແວດລ້ອມ ຕັ້ງແຕ່ຍັງນ້ອຍ, ເດັກປຽບເໝືອນຕົ້ນກ້າ ທີ່ຕ້ອງການດູແລ, ອົບຮົມສັ່ງສອນຈາກພໍ່ແມ່, ຜູ້ປົກຄອງ, ຄູ-ອາຈານ ແລະ ສັງຄົມ ເພື່ອສ້າງພູມຄຸ້ມກັນໃຫ້ເດັກຫ່າງໄກຈາກສິ່ງທີ່ບໍ່ດີ, ສ້າງໃຫ້ເຂົາເຈົ້າເຕີບໃຫຍ່ ເປັນຊັບພະຍາກອນມະນຸດທີ່ມີຄຸນນະພາບ, ເປັນຜູ້ສືບທອດ ແລະ ຕັດສິນຊາຕາກຳຂອງຊາດໃນອະນາຄົດ.

ໃນຊຸມປີຜ່ານມາ, ພັກ ແລະ ລັດຖະບານ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ຕໍ່ການພັດທະນາເດັກລາວ ທັງດ້ານສຸຂະພາບ, ໂພຊະນາການ, ການສຶກສາ, ສົ່ງເສີມຄວາມສະເໝີພາບ, ກາລະໂອກາດ ໃຫ້ເດັກຍິງ-ເດັກຊາຍ ແລະ ການຄຸ້ມຄອງສິດທິເດັກ. ເຖິງຢ່າງໃດກໍຕາມ, ພວກເຮົາເຫັນວ່າ ຍັງມີເດັກຈຳນວນບໍ່ໜ້ອຍ ໂດຍສະເພາະ ເດັກທີ່ອາໄສຢູ່ເຂດຊົນນະບົດຫ່າງໄກສອກຫຼີກຍັງປະເຊີນກັບສິ່ງທ້າທາຍຕ່າງໆ ເຊັ່ນ: ຄວາມທຸກຍາກ, ການອອກໂຮງຮຽນ, ການໃຊ້ຄວາມຮຸນແຮງຕໍ່ເດັກ, ການແຕ່ງດອງກ່ອນໄວອັນຄວນ, ການໃຊ້ແຮງງານເດັກ, ບັນຫາຢາເສບຕິດ, ການປ່ຽນແປງດິນຟ້າອາກາດ, ໄພພິບັດແລະອື່ນໆ; ນອກຈາກນັ້ນ, ໃນຍຸກທີ່ມີການນຳໃຊ້ດິຈິຕອນ ເຮັດໃຫ້ເກີດມີຄວາມສ່ຽງຈາກການນຳໃຊ້ອິນເຕີເນັດແລະສື່ສັງຄົມອອນລາຍ. ສະນັ້ນ, ພວກເຮົາ ຕ້ອງຮ່ວມມືກັນພັດທະນາເດັກລາວ ໃຫ້ມີຄວາມຮູ້, ມີທັກສະນຳໃຊ້ເຕັກໂນໂລຊີຢ່າງສ້າງສັນແລະປອດໄພ, ພ້ອມທັງສ້າງພູມຄຸ້ມກັນໃຫ້ເດັກ ຮູ້ຈັກປົກປ້ອງຕົນເອງຈາກສິ່ງບໍ່ດີຕ່າງໆ.

ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໃນນາມເປັນເສນາທິການໃຫ້ລັດຖະບານ ພວມສຸມໃສ່ສ້າງແຜນດຳເນີນງານແຫ່ງຊາດ ເພື່ອສົ່ງເສີມປົກປ້ອງສິດທິເດັກ ແລະ ແຜນປ້ອງກັນ, ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ເດັກ 2026-2030. ໃນນາມຕາງໜ້າລັດຖະບານແຫ່ງ ສປປລາວ, ຂ້າພະເຈົ້າ ຂໍຢືນຢັນວ່າ ລັດຖະບານຈະສືບຕໍ່ລົງທຶນ ແລະສ້າງເງື່ອນໄຂເພື່ອໃຫ້ເດັກລາວທຸກຄົນໄດ້ຮັບການພັດທະນາຢ່າງຮອບດ້ານ ທັງດ້ານຮ່າງກາຍ, ສະຕິປັນຍາ, ຈິດໃຈ ແລະ ຄຸນນະທຳ. ຂ້າພະເຈົ້າ ຂໍຮຽກຮ້ອງໃຫ້ທຸກພາກສ່ວນໃນສັງຄົມ ພໍ່ແມ່, ຄູ-ອາຈານ, ອົງການຈັດຕັ້ງ, ຊຸມຊົນ, ພາກທຸລະກິດແລະຄູ່ຮ່ວມພັດທະນາ ຈົ່ງໃຫ້ການຮ່ວມມືໃນການສະໜັບສະໜູນການສົ່ງເສີມ, ພັດທະນາ, ປົກປ້ອງ ແລະ ສ້າງໂອກາດທີ່ດີ ໃຫ້ເດັກທຸກຄົນ.

ໃນໂອກາດວັນເດັກສາກົນ ວັນທີ 1 ມິຖຸນາ 2026 ນີ້ ຂໍອວຍພອນໃຫ້ພວກລູກຫຼານອະນຸຊົນ, ເຍົາວະຊົນ ແລະ ເດັກລາວບັນດາເຜົ່າທຸກຖ້ວນໜ້າ ຈົ່ງມີແຕ່ຄວາມເບີກບານມ່ວນຊື່ນ, ມີສຸຂະພາບແຂງແຮງ, ມີຄວາມຝັນອັນຍິ່ງໃຫຍ່, ຕັ້ງໃຈຮຽນ, ຮັກຄອບຄົວ ແລະ ປະເທດຊາດ ເພື່ອເຕີບໃຫຍ່ເປັນກຳລັງສຳຄັນໃນການສ້າງອະນາຄົດອັນສົດໃສໃຫ້ແກ່ປະເທດຊາດບ້ານເມືອງອັນແສນຮັກຂອງພວກເຮົາ.

ຂໍໃຫ້ການສະເຫຼີມສະຫຼອງວັນເດັກສາກົນ ປີ 2026 ຈົ່ງດຳເນີນໄປດ້ວຍຄວາມຟົດຟື້ນ, ເຕັມໄປດ້ວຍຄວາມໝາຍ ແລະ ນຳເອົາຄວາມສຸກ-ຄວາມເບີກບານມ່ວນຊື່ນ ມາສູ່ເດັກລາວທຸກຄົນ.

**ຂໍຂອບໃຈ!**

## ຜູ້ແທນ...

(ຕໍ່ຈາກໜ້າ 3)

ໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງ ສປປລາວ ແລະ ສ.ເກົາຫຼີ ກໍຄືລະຫວ່າງສະພາແຫ່ງຊາດ ລາວ ແລະ ສ.ເກົາຫຼີ ທີ່ໄດ້ຮັບການຂະຫຍາຍຕົວເປັນຢ່າງດີ ແລະ ຕໍ່ເນື່ອງ ເຊິ່ງສະແດງອອກໃນການແລກປ່ຽນຄະນະຜູ້ແທນຂັ້ນສູງຫຼາຍລະດັບ, ມີການຮ່ວມມືທາງດ້ານເສດຖະກິດ, ການຄ້າ-ການລົງທຶນ, ການສຶກສາ, ສາທາລະນະສຸກ, ແຮງງານ, ການທ່ອງທ່ຽວແລະອື່ນໆ. ພ້ອມກັນນີ້, ທ່ານປະທານຄະນະມິດຕະພາບລັດຖະສະພາ ສ.ເກົາຫຼີ - ລາວ ກໍເຫັນດີຈະສືບຕໍ່ຊຸກຍູ້ໃຫ້ມີການແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆນຳກັນລະຫວ່າງສອງສະພາແຫ່ງຊາດຕິດພັນກັບການແລກປ່ຽນບົດຮຽນໃນການປະຕິບັດພາລະບົດບາດດ້ານນິຕິບັນຍັດ ໂດຍສະເພາະການສ້າງກົດໝາຍ, ການຄົ້ນຄວ້າພິຈາລະນາການຈັດສັນງົບປະມານ, ການຊຸກຍູ້ສະໜັບສະໜູນໃຫ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ຂໍ້ຕົກລົງ, ບັນດາໂຄງການຮ່ວມມືທີ່ໄດ້ລົງນາມຮ່ວມກັນ ໃຫ້ມີປະສິດທິຜົນ; ສືບຕໍ່ຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ; ຈະສືບຕໍ່ຕິດຕາມ ແລະ ຊຸກຍູ້ໃຫ້ສະພາແຫ່ງຊາດ ສ.ເກົາຫຼີ ພິຈາລະນາລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດ ສ.ເກົາຫຼີ ແລະ ສະພາແຫ່ງຊາດລາວ ທີ່ອາດຈະລົງນາມຮ່ວມກັນໃນຕໍ່ໜ້ານີ້; ພ້ອມທັງຈະໃຫ້ການເບິ່ງແຍງດູແລປະຊາຊົນລາວທີ່ມາອອກແຮງງານຢູ່ ສ.ເກົາຫຼີ ໃຫ້ມີຄວາມສະດວກຂຶ້ນຕື່ມ ຕາມການສະເໜີຂອງຝ່າຍລາວ.

ໃນໄລຍະການເຄື່ອນໄຫວວຽກງານ, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ເຂົ້າພົບປະຢ້ຽມຢາມສະຖານເອກອັກຄະລັດຖະທູດ ແຫ່ງ ສປປລາວ ປະຈຳ ສ.ເກົາຫຼີ ໂດຍທ່ານ ນາງ ໄກມະນີ ອໍລະບູນ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ, ແຈ້ງສະພາບການເຄື່ອນໄຫວໂດຍຫຍໍ້ຂອງສະຖານທູດລາວ, ຮ່ວມກັນປຶກສາຫາລືແລະແລກປ່ຽນຄຳຄິດເຫັນກ່ຽວກັບການປະຕິບັດພາລະບົດບາດຂອງເອກອັກຄະລັດຖະທູດລາວ ໃນການເປັນຂົວຕໍ່ທີ່ດີໃຫ້ແກ່ການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມມີມາແຕ່ດົນນານ ທີ່ກາຍເປັນຄູ່ຮ່ວມຍຸດທະສາດຮອບດ້ານລະຫວ່າງ ສປປລາວ ແລະ ສ.ເກົາຫຼີ ກໍຄືການພົວພັນ ແລະ ຮ່ວມມື ລະຫວ່າງສອງອົງການນິຕິບັນຍັດ ລາວ - ສ.ເກົາຫຼີ ໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ. ຄະນະຜູ້ແທນສະພາແຫ່ງຊາດລາວຍັງໄດ້ໄປທັດສະນະສຶກສາ ແລະ ຢ້ຽມຢາມຕຶກສະພາແຫ່ງຊາດ, ສານລັດຖະທຳມະນູນ, ສູນສະແດງການຈຳລອງການໃຊ້ຊີວິດປະຈຳວັນ ທີ່ເປັນມໍລະດົກທາງດ້ານວັດທະນະທຳຮ່ວມສະໄໝຂອງປະຊາຊົນຊາວເກົາຫຼີ (HiKR), ຫໍພິພິທະພັນແຫ່ງຊາດ, ຫໍພິພິທະພັນຕົວໜັງສືທາງການຂອງປະເທດເກົາຫຼີ, ພື້ນຖານທາງດ້ານເສດຖະກິດ, ການຄ້າ ແລະ ວັດທະນະທຳ ຈຳນວນໜຶ່ງ ຢູ່ນະຄອນຫຼວງເຊອູນອີກດ້ວຍ.




## ສ້າງຄວາມເຂັ້ມແຂງ...

(ຕໍ່ຈາກໜ້າ 1)

Population and Development - AFPPD): ການສ້າງຄວາມເຂັ້ມແຂງໃຫ້ຊາວໜຸ່ມເພື່ອການເຕີບໂຕແບບກວມລວມ ໄດ້ຈັດຂຶ້ນໃນວັນທີ 4 ມິຖຸນາ 2026 ທີ່ໂຮງແຮມ ຄຣາວພລາຊາ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ມອນໄຊ ລາວມົວຊື່ງ ຮອງປະທານສະພາແຫ່ງຊາດ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ, ທ່ານ ດຣ. ອຸສໂມນອບ ຟາຣ໌ຣຸກ ຜູ້ອຳນວຍການບໍລິຫານຂອງ AFPPD, ທ່ານ ດຣ. ບາກຕິຍໍ ກາດີຣອບ ຜູ້ຕາງໜ້າອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ (UnitedNationsPopulation Fund - UNFPA) ປະຈຳ ສປປລາວ ແລະ ທ່ານ ໂຄອິຊຸມິ ຊີໂຕມຸ ເອກອັກຄະລັດຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງປະເທດຍີ່ປຸ່ນ ປະຈຳ ສປປລາວ ເຊິ່ງມີທ່ານ ໂຢເກຊ໌ ກໍຈັນ ທາຄາລີ ສະມາຊິກລັດຖະສະພາປະເທດເນປານ, ປະທານຮ່ວມຄະນະກຳມະການປະຈຳ AFPPD ກ່ຽວກັບການລົງທຶນໃນຊາວໜຸ່ມ (ເຂົ້າຮ່ວມທາງອອນລາຍ), ບັນດາທ່ານຫົວໜ້າຄະນະຜູ້ແທນຈາກບັນດາປະເທດສະມາຊິກຂອງ AFPPD ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ພ້ອມດ້ວຍກອງເລຂາ ເຂົ້າຮ່ວມ.

ທ່ານ ມອນໄຊ ລາວມົວຊົງ ກ່າວວ່າ: ກອງປະຊຸມສະມາຊິກສະພາໜຸ່ມຂອງອົງການສະມາຊິກລັດຖະສະພາອາຊີ ເພື່ອສົ່ງເສີມວຽກງານປະຊາກອນ ແລະ ການພັດທະນາ ຄັ້ງນີ້ ມີຄວາມໝາຍຄວາມສຳຄັນເປັນຢ່າງຍິ່ງ ແລະ ເປັນໂອກາດດີທີ່ບັນດາສະມາຊິກຂອງAFPPD ໄດ້ແລກປ່ຽນຄວາມຮູ້, ບົດຮຽນ, ປະສົບການ ກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ຊາວໜຸ່ມ ເພື່ອການເຕີບໂຕແບບຮອບດ້ານ; ພ້ອມກັນປຶກສາຫາລືກ່ຽວກັບນະໂຍບາຍດ້ານການພັດທະນາກຳລັງການລົງທຶນໃສ່ຊາວໜຸ່ມ, ສະຫວັດດີການສັງຄົມທີ່ດີ, ການເສີມສ້າງຄວາມອາດສາມາດຂອງສະມາຊິກລັດຖະສະພາໜຸ່ມໃນການສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມ, ການມີສ່ວນຮ່ວມຂອງຊາວໜຸ່ມ ໃນການຕັດສິນໃຈ ແລະ ສ້າງໂອກາດການຈ້າງງານທີ່ເໝາະສົມ.

ກອງປະຊຸມໄດ້ຮັບຟັງການສະເໜີບົດ ພາຍໃຕ້ 4 ຫົວຂໍ້ຄື: 1. ແນວໂນ້ມດ້ານປະຊາກອນ ແລະ ການລົງທຶນໃນຊາວໜຸ່ມ: ໂອກາດ ແລະ ຜົນສະທ້ອນດ້ານນະໂຍບາຍ; 2. ການສຶກສາ, ການພັດທະນາທັກສະ ແລະ ການຫັນປ່ຽນຈາກໂຮງຮຽນໄປສູ່ການເຮັດວຽກ; 3. ການຈ້າງງານຂອງຊາວໜຸ່ມ, ການເຄື່ອນຍ້າຍ ແລະ ການເຕີບໂຕທາງເສດຖະກິດແບບຮອບດ້ານ; 4. ສຸຂະພາບ, ສິດທິ ແລະ ສະຫວັດດີການສັງຄົມຂອງຊາວໜຸ່ມ. ນອກຈາກນີ້, ຍັງໄດ້ມີການແລກປ່ຽນຄຳຄິດຄຳເຫັນ ແລະ ປະສົບການຂອງບັນດາອົງການຈັດຕັ້ງສາກົນ ກ່ຽວກັບການຍົກສູງຂີດຄວາມສາມາດ ແລະ ການຮ່ວມມື ໃນການປະຕິບັດໜ້າທີ່ຂອງ AFPPD ຕໍ່ປະເທດສະມາຊິກ ເພື່ອຍົກສູງຄວາມເຂັ້ມແຂງຂອງຕົນໃນຕໍ່ໜ້າ.

ວັນທີ 5 ມິຖຸນາ, ຄະນະຜູ້ແທນໄດ້ໄປຢ້ຽມຢາມບັນດາສູນຊາວໜຸ່ມ ແລະ ແລກປ່ຽນປະສົບການ ແລະ ສັງເກດການບັນດາມາດຕະການຈັດຕັ້ງປະຕິບັດຕໍ່ວຽກງານຊາວໜຸ່ມຂອງ ສປປລາວ, ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດລາວ.

**(ສອນສັກ ວັນວິໄຊ)**



## ສັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມຫ້ຽນ**

※ ວັນທີ 1 ມິຖຸນານີ້ ມີຫຼາຍສະຖານທີ່ໄດ້ຈັດພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ບັນຍາກາດຄຶກຄື້ນ ເບື້ອງທີ່ອສັງຄົມ ມີທັງຊົມສິລະປະ ພໍ່ກິດຈະກຳຫຼິ້ນເກມຕອບ-ຖາມແຖມເນັ້ນກອດກາສຸຂະພາບ ພານັກຮຽນແຫ່ຢ້ຽມ ຢາມເບື້ອງບ່ອນເສີມປະສົບການ **ຊົມເຊີຍ!**

※ຍັງອົບອຽນຢູ່ກັບວັນທີ 1 ມິຖຸນາ ເພື່ອສູ້ຊົນຕາມຄາດໝາຍສູຊົນໃຫ້ ໃນປີ 2030 ສປປລາວ ຈະຮັກສາທີ່ດິນປ່າໄມ້ໃຫ້ໄດ້ 16.5 ລ້ານເຮັກຕາ ຮອງຮັບມາຮຽບຮ້ອຍແຜນໃຫຍ່ຜັນຂະຫຍາຍ **ໃຫ້ໄດ້ເນີ!** ປູກທັງຮັກສາຕາມແຜນ ຊ່ວຍກັນຄົບຕົ້ນ ສູ້ຊົນຄຸ້ມຄອງໄວ້ ໃຫ້ຍືນຍົງຄົງຢູ່ ຄູ່ປະຊາຊາດເຊື້ອ ຄືກີ້ເກົ່າຫຼັງ **ນັ້ນຕອນ!**

## ຊວນຍິ້ມ

**# ພົ້ງອຶ່ງ**

### ເລື່ອງ: ຊື້ຕາມມັກ

ມື້ເລກອອກ ທ້າວຕຸ້ຍບອກນ້ອງຊາຍໄປຊື້ເລກ

**ທ້າວຕຸ້ຍ:** ຈ່ອຍ ມຶງໄປຊື້ເລກໃຫ້ອ້າຍແດ່ 75 ເດີ, ຄັນມັນເຕັມມັກຫຍັງກະຊື້ໂລດ ເອົາທີ່ໃກ້ກັບຫັ້ນ; ປະມານ 30 ນາທີຕໍ່ມາ ທ້າວຈ່ອຍ ກໍ່ມາຮອດ

**ທ້າວຕຸ້ຍ:** ໄດ້ບໍ່?

**ທ້າວຈ່ອຍ:** ບໍ່, ມັນເຕັມແລ້ວ

**ທ້າວຕຸ້ຍ:** ມຶງຊື້ຫຍັງມາຫັ້ນ?

**ທ້າວຈ່ອຍ:** ຊື້ໝາກມ່ວງກໍ່ສ່ມາກິນກັບເຂົ້າ

**ທ້າວຕຸ້ຍ:** ບັກເອນມຶງເອີຍ ກູບອກໃຫ້ຊື້ເລກ

**ທ້າວຈ່ອຍ:** ແນວອ້າຍບອກວ່າ ຄັນບໍ່ມີ 75 ມັກຫຍັງຊື້ໂລດ,ນ້ອງມັກໝາກມ່ວງກະເລີຍຊື້ໝາກມ່ວງກໍ່ສ່ມາຍັດໂບກ, ນ້ອງບໍ່ໄດ້ມັກເລກ

**ທ້າວຕຸ້ຍ:** !!!



## ສຸພາສິດ-ຄະຕິເຕືອນໃຈ

*#ດອກຫຍ້າ*

"ເຊື້ອໝາກຕ້ອງ ບໍ່ທ່ອນຫຼິ້ນໄກກົກ
ເຊື້ອຜົມດົກ ບໍ່ທ່ອນເປັນຫົວລ້ານ"

ອາດ
ກະວີລາວ

## ກອດເບິ່ງຄືນ

**# ສໍ ແພງຄຳຮັກ**

※ ກອດເບິ່ງຄືນແມ່ນຂໍ້
ເປັນສຳນວນຊວນຄິດ
ເພາະວ່າດົນນານແລ້ວ
ຝົນປ່ອຍປະແບບນີ້

ຫົວບົດກ່າວກະວີກອນ
ຊອກຫາວິທີແກ້
ຄວນປັບປຸງຫັນປ່ຽນ
ຜົນໄດ້ຊິສ່ຳໃດ

※ ຜັກລັດກຳນົດໄວ້
ຮຽກຮ້ອງປວງປະຊາ
ເປັນພະລັງໂຮມເຕົ້າ
ລົງມືປູກພືດໄມ້

ວັນທີ 1 ມິຖຸນາ
ແຕ່ເໜືອເຖິງໃຕ້
ຂະບວນການສຸມໃສ່
ເຕັມດ້າວທົ່ວແດນ

※ ຫຼາຍແນວພັນແກ່ນໄມ້
ແຕ້ຂ່າຍຸງຍາງແດງ
ເພາະວ່າດົງດອນໄມ້
ທຳມະຊາດກໍປ່ຽນປີ້ນ

ນຳໄປປູກເປັນດົງ
ປູກທົດແທນເສີມເພີ້ມ
ຖືກທຳລາຍຫຼາຍປີຜ່ານ
ລະວັງໄວ້ແມ່ນດີ

※ ມີບາງວັນຝົນກະໜ່ຳພື້ນ
ຖ້ວມໄຮ່ນາເຮືອນຊານ
ບາງວັນແດດອົບເອົ້າ
ທັງໝົດມວນໝູ່ນັ້ນ

ເຫທັ່ງລົມໄຫຼ
ດັ່ງເຫັນມາແລ້ວ
ຈົນຜິວກາຍແດງແສບ
ເພາະດິນຟ້າປ່ຽນແປງ ວ່ານາ!

※ ກັບມາເວົ້າບ່ອນນັ້ນ
ແຕ່ລະປີລະດົມກັນ
ສຳຄັນປູກໄປແລ້ວ
ຕາຍແລະເຫຼືອຈັກຕົ້ນ

ວັນທີ 1 ມິຖຸນາ
ປູກແນວພັນໄມ້
ກວດກາຄືນປະເມີນເບິ່ງ ບໍ່ນໍ
ອັນນີ້ເບິ່ງຄືນ ທ່ານເອີຍ!

# ລັດຖະສະພາ Ghana ອະນຸມັດ ຮ່າງກົດໝາຍໃຫ້ "ການສົ່ງເສີມ LGBTQ" ເປັນຄວາມຜິດທາງອາຍາ

(Reuters) - ວັນສຸກທີ 29 ພຶດສະພານີ້, ລັດຖະສະພາຂອງປະເທດການາ ໄດ້ອະນຸມັດຮ່າງກົດໝາຍສະບັບໃໝ່ ທີ່ກຳນົດໃຫ້ການສົ່ງເສີມກິດຈະກຳຂອງກຸ່ມເພດທາງເລືອກ ຫຼື LGBTQ ເປັນຄວາມຜິດທາງອາຍາ, ເຊິ່ງເປັນສ່ວນໜຶ່ງຂອງການປາບປາມໃນວົງກວ້າງຕໍ່ກຸ່ມຜູ້ທີ່ມີຄວາມຫຼາກຫຼາຍທາງເພດ ໃນອາຟຣິກາຕາເວັນຕົກ.

ເບີນາດ ອາເຮຍຟໍ (Bernard Ahiafor) ຮອງປະທານລັດຖະສະພາຄົນທີໜຶ່ງກ່າວວ່າ ຮ່າງກົດໝາຍສິດທິມະນຸດທາງເພດ ແລະ ຄຸນຄ່າຄອບຄົວ (Human Sexual Rights and Family Values Bill) ປີ 2025 ໄດ້ຜ່ານດ້ວຍການລົງຄະແນນສຽງຫຼັງຈາກກຳມາທິການກິດຈະການລັດຖະທຳມະນູນ ແລະ ກົດໝາຍ ມີມະຕິເປັນເອກະສັນແນະນຳໃຫ້ຮັບຮອງເອົາ.

ຮ່າງກົດໝາຍສະບັບນີ້ ຖືກສະເໜີເມື່ອປີຜ່ານມາ ຫຼັງຈາກປະທານາທິບໍດີ ຈອນ ດຣາມານີ ມາຮາມາ (John Dramani Mahama) ຜູ້ນຳການາເຂົ້າຮັບຕຳແໜ່ງໄດ້ບໍ່ດົນ ເຊິ່ງສະມາຊິກສະພານິຕິບັນຍັດຈາກພັກສະພາປະຊາທິປະໄຕແຫ່ງຊາດ (National Democratic Congress) ຂອງມາຮາມາ ຖືກຜູ້ນຳທາງສາສະໜາ ແລະ ຜູ້ສະໜັບສະໜູນຮ່າງກົດໝາຍ ຮຽກຮ້ອງໃຫ້ລົງມະຕິອະນຸມັດ ແລະໃນຕອນນີ້, ມາຮາມາຈະປະເຊີນກັບຄວາມກົດດັນໃຫ້ລົງນາມໃນຮ່າງກົດໝາຍສະບັບນີ້.




ກ່ອນໜ້ານີ້, ສະມາຊິກສະພານິຕິບັນຍັດ ໄດ້ຜ່ານຮ່າງກົດໝາຍທີ່ຄ້າຍຄືກັນ ໃນປີ 2024 ໃນສະໄໝປະທານາທິບໍດີ ນານາ ອາກູໂຟ-ແອດໂດ (Nana Akufo-Addo) ຜູ້ທີ່ດຳລົງຕຳແໜ່ງກ່ອນໜ້າ ມາຮາມາ, ແຕ່ຮ່າງກົດໝາຍດັ່ງກ່າວປະເຊີນກັບຄວາມທ້າທາຍທາງກົດໝາຍ ແລະ ອາກູໂຟ-ແອດໂດ ກໍບໍ່ເຄີຍລົງນາມໃຫ້ມີຜົນບັງຄັບໃຊ້ເປັນກົດໝາຍ.

ຮ່າງກົດໝາຍສະບັບໃໝ່, ຍັງຄົງຮັກສາໂທດທີ່ມີຢູ່ນັ້ນຄືຕັດອິດສະລະພາບສູງສຸດ 3 ປີສຳລັບການກະທຳທາງເພດລະຫວ່າງບຸກຄົນເພດດຽວກັນ; ນອກຈາກນີ້, ຍັງຫ້າມການສະໜອງທຶນ, ການສະໜັບສະໜູນ ຫຼື ການສົ່ງເສີມກິດ ຈະກຳຂອງກຸ່ມເພດທາງເລືອກໂດຍມີໂທດຕັດອິດສະລະພາບຕັ້ງແຕ່ 3- 5 ປີ ລວມທັງກຳນົດ "ໜ້າທີ່ໃນການລາຍງານ" ການກະທຳຖືກຫ້າມຂອງກຸ່ມເພດທາງເລືອກຕໍ່ຕຳຫຼວດ ຫຼື ອົງການອື່ນໆ, ໂດຍຜູ້ລະເມີດຈະຖືກຕັດອິດສະລະພາບສູງສຸດ 3 ປີ.

# Poland ຈະຫ້າມເດັກຕ່ຳກວ່າ 16 ປີ ໃຊ້ໂທລະສັບມືຖື ໃນໂຮງຮຽນ, ກວດສອບອາຍຸຜູ້ເຂົ້າເຖິງສື່ລາມົກ

(NFP) - ລັດຖະບານໂປໂລຍກຽມຫ້າມເດັກອາຍຸຕ່ຳກວ່າ 16 ປີ ໃຊ້ໂທລະສັບມືຖືໃນໂຮງຮຽນ ເລີ່ມຕົ້ນເດືອນກັນຍານີ້, ພ້ອມທັງຊຸກຍູ້ກົດໝາຍທີ່ເຂັ້ມງວດການຢືນຢັນອາຍຸຜູ້ເຂົ້າເຖິງເວັບໄຊລາມົກອະນາຈານ.

ວັນທີ 2 ມິຖຸນາ 2026, ໂດນັລ ທັສກ໌ (Donald Tusk) ນາຍົກລັດຖະມົນຕີໂປໂລຍ ກ່າວວ່າ ລັດຖະບານມີແຜນຈະຫ້າມຜູ້ມີອາຍຸຕ່ຳກວ່າ 16 ປີ ໃຊ້ໂທລະສັບມືຖືໃນໂຮງຮຽນ ຕັ້ງແຕ່ວັນທີ 1 ກັນຍານີ້ ແລະ ກຽມອອກມາດຕະການກວດສອບອາຍຸທີ່ເຂັ້ມງວດກວ່າເກົ່າສຳລັບການເຂົ້າເຖິງເນື້ອໃນລາມົກອະນາຈານທາງອອນລາຍ.

ທັງນີ້, ລັດຖະບານກຳລັງຮ່າງກົດໝາຍໃຫ້ລັດຖະສະພາພິຈາລະນາ, ເຊິ່ງຈະຫ້າມເດັກອາຍຸ 7-15 ປີ ໃຊ້ໂທລະສັບມືຖືພາຍໃນສະຖານທີ່ໂຮງຮຽນ, ລວມທັງໃນໄລຍະພັກຜ່ອນລະຫວ່າງຄາບຮຽນ ແລະ ຈະໃຫ້ອຳນາດທາງກົດໝາຍແກ່ໂຮງຮຽນ ໃນການຈັດຈຸດຮັບຝາກໂທລະສັບມືຖື.



ຂະນະດຽວກັນ, ຮ່າງກົດໝາຍອີກສະບັບທີ່ສະເໜີໂດຍກະຊວງດິຈິຕອນ ຈະກຳນົດຄວາມຮັບຜິດຊອບໃໝ່ຕໍ່ເວັບໄຊທີ່ເຜີຍແຜ່ເນື້ອໃນລາມົກອະນາຈານ ເພື່ອຈຳກັດການເຂົ້າເຖິງຂອງເດັກ ໂດຍລະບົບຢືນຢັນອາຍຸຜູ້ໃຊ້ງານ ຈະບໍ່ສາມາດອາໄສພຽງການປ້ອນຂໍ້ມູນອາຍຸດ້ວຍຕົນເອງ, ຂໍ້ມູນຊີວະມິຕິ ຫຼື ຂໍ້ມູນກິດຈະກຳອອນລາຍຂອງຜູ້ໃຊ້, ແຕ່ຕ້ອງອອກແບບໃຫ້ສອດຄ່ອງກັບຫຼັກການປົກປ້ອງຂໍ້ມູນສ່ວນບຸກຄົນ ແລະ ຄວາມເປັນສ່ວນຕົວ.

ໃນເດືອນກຸມພາທີ່ຜ່ານມາ, ນາງ ບາຣ໌ບາຣາ ໂນວັກກາ (Barbara Nowacka) ລັດຖະມົນຕີກະຊວງສຶກສາທິການ ໄດ້ສະເໜີແຜນການທີ່ຫ້າມເດັກອາຍຸຕ່ຳກວ່າ 15 ປີ ໃຊ້ສື່ສັງຄົມເຊັ່ນກັນ.

ຢ່າງໃດກໍຕາມ, ແນວຄິດນີ້ໄດ້ນຳໄປສູ່ການປະເຊີນໜ້າກັບບັນດາບໍລິສັດເຕັກໂນໂລຊີລາຍໃຫຍ່ຂອງສະຫະລັດອາເມລິກາ ທີ່ໂຕ້ຖຽງວ່າ ຄວນເນັ້ນໄປທີ່ວິທີການນຳໃຊ້ອຸປະກອນແທນທີ່ການສັ່ງຫ້າມຢ່າງເດັດຂາດ ເນື່ອງຈາກປັດຈຸບັນມີລະບົບການຄວບຄຸມໂດຍຜູ້ປົກຄອງ ແລະ ການຈຳກັດສິດສະເພາະຈຸດອື່ນໆໃຫ້ເລືອກໃຊ້ ພ້ອມທັງຊີ້ໃຫ້ເຫັນເຖິງຜົນປະໂຫຍດຂອງໂທລະສັບອັດສະລິຍະ ໃນດ້ານການຮຽນຮູ້, ການສື່ສານ ແລະ ຄວາມປອດໄພດ້ວຍເຊັ່ນກັນ.

# ອິຕາລີ ອອກກົດໝາຍຮຽນ "ເພດສຶກສາ" ຕ້ອງໄດ້ຮັບການຍິນຍອມຈາກຜູ້ປົກຄອງ



(REUTERS) - ການສຶກສາເລື່ອງເພດໃນໂຮງຮຽນຂອງອິຕາລີໃນປັດຈຸບັນຈະຕ້ອງໄດ້ຮັບຄວາມຍິນຍອມຈາກຜູ້ປົກຄອງ ພາຍໃຕ້ການປະຕິຮູບທີ່ຊຸກຍູ້ໂດຍລັດຖະບານຝ່າຍຂວາຂອງນາຍົກລັດຖະມົນຕີ ນາງ ຈໍເຈຍ ເມໂລນີ (Giorgia Meloni), ເຊິ່ງລວມການຫ້າມຍົກເວັ້ນການສຶກສາເລື່ອງເພດໃນໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມດ້ວຍ.

ຮ່າງກົດໝາຍທີ່ສະເໜີໂດຍ ຈູເຊບເປ ວັລດິຕາຣາ (Giuseppe Valditara) ລັດຖະມົນຕີກະຊວງສຶກສາທິການ ແລະ ໄດ້ຮັບການອະນຸມັດຂັ້ນສຸດທ້າຍໃນສະພາສູງເມື່ອວັນພະຫັດທີ 4 ມິຖຸນານີ້ ຖືກວິພາກວິຈານ ຈາກພັກຝ່າຍຄ້ານວ່າ ອາດຈຳກັດການເຂົ້າເຖິງຂໍ້ມູນທີ່ສຳຄັນຂອງໄວຮຸ່ນ.

ແອງເຈໂລ ໂບເນລລີ (Angelo Bonelli) ຜູ້ນຳຮ່ວມຂອງພັກກຣີນ ແລະ ພັນທະມິດຝ່າຍຊ້າຍ ກ່າວວ່າ ການກຳນົດໃຫ້ວິຊາເພດສຶກສາຫຼືການສຶກສາເລື່ອງເພດ ໃນສະຖານສຶກສາໄດ້ຮັບຄວາມຍິນຍອມຈາກຜູ້ປົກຄອງ ນັ້ນ ແມ່ນຄ້າຍຄືກັບການຂໍອະນຸຍາດຈາກຄອບຄົວເພື່ອສອນພາສາອິຕາລີ (ວັນນະຄະດີ) ຫຼື ປະຫວັດສາດ - ເຊິ່ງເປັນຄວາມບໍ່ສົມເຫດສົມຜົນຂອງສະຖາບັນ ທີ່ທຳລະຍົດຕໍ່ພາລະກິດດ້ານການສຶກສາຂອງໂຮງຮຽນລັດ.

ວັລດິຕາຣາ ກ່າວຫຼັງຈາກການລົງຄະແນນສຽງວ່າ ການປະຕິຮູບນີ້ ຈະປົກປ້ອງຜູ້ເຍົາ "ຈາກຄວາມສັບສົນ" ຂອງການໂຄສະນາເລື່ອງເພດ ແລະ ຟື້ນຟູຫຼັກການຕາມລັດຖະທຳມະນູນທີ່ວ່າຜູ້ປົກຄອງມີໜ້າທີ່ຮັບຜິດຊອບຕໍ່ການສຶກສາຂອງລູກຫຼານພວກເຂົາ.

ຄຳວ່າ "ທິດສະດີເພດ" ຫຼື "ການໂຄສະນາຊວນເຊື່ອເລື່ອງເພດ" ມັກຖືກໃຊ້ໂດຍນັກການເມືອງຝ່າຍອະນຸລັກນິຍົມ ເພື່ອທຳລາຍຄວາມໜ້າເຊື່ອຖືຂອງການສຶກສາທາງວິຊາການ ຫຼື ນະໂຍບາຍທີ່ທ້າທາຍແນວຄິດແບບດັ້ງເດີມກ່ຽວກັບຄວາມເປັນຊາຍ ແລະ ຄວາມເປັນຍິງ, ຫຼືລະບຸວ່າອັດຕະລັກທາງເພດບໍ່ໄດ້ຕາຍຕົວ.

ພາຍໃຕ້ກົດໝາຍໃໝ່, ໂຮງຮຽນຕ້ອງແຈ້ງໃຫ້ຄອບຄົວຊາບລ່ວງໜ້າຢ່າງໜ້ອຍ 7 ວັນ ກ່ອນເລີ່ມໂຄງການ ໃຫ້ຄວາມຮູ້ເລື່ອງເພດສຶກສາໃດໆ ລວມທັງລາຍລະອຽດກ່ຽວກັບຜູ້ຊ່ຽວຊານພາຍນອກ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ.

# ລັດໃນອົດສະຕຣາລີ ອອກກົດໝາຍອະນຸຍາດສັ່ງປິດຮ້ານຢາສູບເຖື່ອນ ຫຼັງຈາກການໃຊ້ນິໂຄຕິນເພີ່ມຂຶ້ນ



(Reuters) - ວັນທີ 4 ມິຖຸນານີ້, ລັດວິກຕໍເຣຍ (Victoria) ຂອງອົດສະຕຣາລີ ໄດ້ອອກກົດໝາຍສະບັບໃໝ່ ເພື່ອໃຫ້ອຳນາດແກ່ເຈົ້າໜ້າທີ່ຫຼາຍຂຶ້ນ ໃນການປິດທຸລະກິດທີ່ຈຳໜ່າຍຢາສູບຜິດກົດໝາຍ, ຫຼັງຈາກຂໍ້ມູນໃໝ່ສະແດງໃຫ້ເຫັນວ່າການໃຊ້ສານນິໂຄຕິນເພີ່ມສູງຂຶ້ນທົ່ວປະເທດ.

ອົດສະຕຣາລີ ເກັບພາສີຂອງລັດຖະບານກາງປະມານ 1.50 ໂດລາອົດສະຕຣາລີ (ປະມານ 1.07 ໂດລາສະຫະລັດ) ຕໍ່ຢາສູບ 1 ກອກ ເພື່ອຫຼຸດຜ່ອນການສູບຢາສູບ, ເຮັດໃຫ້ຢາສູບ 1 ຊອງ ມີລາຄາສູງກວ່າ 60 ໂດລາອົດສະຕຣາລີ, ເຊິ່ງນຳໄປສູ່ການເພີ່ມຂຶ້ນຂອງຜະລິດຕະພັນຢາສູບຜິດກົດໝາຍ.

ລັດຖະບານລັດວິກຕໍເຣຍກ່າວວ່າ ຫາກກົດໝາຍໃໝ່ນີ້ຜ່ານການອະນຸມັດ, ຈະເຮັດໃຫ້ຕຳຫຼວດ ແລະ ຜູ້ຄວບຄຸມການອອກໃບອະນຸຍາດຢາສູບຂອງລັດ ສາມາດອອກຄຳສັ່ງປິດທຸລະກິດແລະຂໍຄຳສັ່ງສານເພື່ອປິດທຸລະກິດເປັນເວລາດົນຂຶ້ນ; ທຸລະກິດທີ່ບໍ່ປະຕິບັດຕາມຄຳສັ່ງ ອາດຈະຕ້ອງປະເຊີນກັບຄ່າປັບໃໝຫຼາຍກວ່າ 2.4 ລ້ານໂດລາອົດສະຕຣາລີ ແລະ ຕັດອິດສະລະພາບສູງສຸດ 20 ປີ.

ເອັນເວີ ເອີໂດກັນ (Enver Erdogan) ລັດຖະມົນຕີກະຊວງການຄວບຄຸມຄາສິໂນ, ການພະນັນ ແລະ ເຫຼົ້າ ຂອງອົດສະຕຣາລີ ເນັ້ນໜັກວ່າການຄ້າຂາຍຢາສູບຜິດກົດໝາຍ ເປັນອັນຕະລາຍຕໍ່ຊາວລັດວິກຕໍເຣຍ, ເປັນແຫຼ່ງທຶນສຳລັບອາຊະຍາກຳທີ່ມີການຈັດຕັ້ງ ແລະ ຈຳເປັນຕ້ອງມີການປະສານງານຂ້າມຊາຍແດນເພື່ອກຳຈັດມັນອອກໄປ.

ກົດໝາຍສະບັບນີ້ອອກມາພ້ອມຂໍ້ມູນຈາກສຳນັກງານສະຖິຕິແຫ່ງອົດສະຕຣາລີ (Australian Bureau of Statistics - ABS) ທີ່ສະແດງໃຫ້ເຫັນວ່າ ການບໍລິໂພກນິໂຄຕິນທົ່ວປະເທດເພີ່ມຂຶ້ນ 40% ລະຫວ່າງປີ 2017-2025 ເຊິ່ງສູງກວ່າອັດຕາການເຕີບໂຕຂອງປະຊາກອນ ທີ່ 14%; ການເພີ່ມຂຶ້ນນີ້ ເກີດຈາກການເພີ່ມຂຶ້ນຂອງການໃຊ້ຢາສູບ ແລະ ຢາສູບໄຟຟ້າທີ່ຜິດກົດໝາຍ, ຄາດຄະເນວ່າ 80% ຂອງຢາສູບ ແລະ ຜະລິດຕະພັນນິໂຄຕິນອື່ນໆ ທີ່ຊາວອົດສະຕຣາລີບໍລິໂພກເມື່ອປີຜ່ານມາ ແມ່ນມາຈາກຕະຫຼາດມືດ.



## ປະທານ...

(ຕໍ່ຈາກໜ້າ 1)

ແລະ ຜູ້ບັນຊາການທະຫານສູງສຸດ ແຫ່ງ ລາຊະອານາຈັກໄທ ຄັ້ງທີ2ທີ່ນະຄອນຫຼວງວຽງຈັນ.

ທ່ານ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການເດີນທາງມາຢ້ຽມຢາມ ສປປລາວ ຂອງຜູ້ບັນຊາການທະຫານສູງສຸດໄທ ພ້ອມດ້ວຍຄະນະ ໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ, ການຮ່ວມມືທີ່ມີມູນເຊື້ອອັນດີງາມ ຖານບ້ານໃກ້ເຮືອນຄຽງທີ່ດີ ແລະ ການເປັນຄູ່ຮ່ວມຍຸດທະສາດ ເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງ ລະຫວ່າງສອງລັດຖະບານ, ປະຊາຊົນສອງຊາດເວົ້າລວມ, ເວົ້າສະເພາະ ກໍຄືສອງກອງທັບ ລາວ-ໄທ ໃຫ້ຈະເລີນງອກງາມຍິ່ງໆຂຶ້ນ ທັງສະແດງຄວາມຊົມເຊີຍຕໍ່ການພົວພັນຮ່ວມມືອັນດີງາມ ແລະ ມີປະສິດທິຜົນ ຂອງສອງກອງທັບໃນໄລຍະຜ່ານມາ ໂດຍສະເພາະຜົນສຳເລັດທີ່ເປັນຮູບປະທຳໃນການແກ້ໄຂບັນຫາຕ່າງໆ ຕາມບໍລິເວນຊາຍແດນ. ພ້ອມນັ້ນ, ທ່ານປະທານສະພາແຫ່ງຊາດ ຍັງໄດ້ເນັ້ນໜັກໃຫ້ສອງກອງທັບ ສືບຕໍ່ເພີ່ມທະວີຮັດແໜ້ນການພົວພັນຮ່ວມມືຢ່າງໃກ້ຊິດຕື່ມ ໂດຍຜ່ານການແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆນຳກັນຢ່າງປົກກະຕິ; ສືບຕໍ່ເອົາໃຈໃສ່ປະສານສົມທົບກັນຢ່າງໃກ້ຊິດ ໃນການສະກັດກັ້ນການກໍ່ຄວາມບໍ່ສະຫງົບລຽບຕາມຊາຍແດນ ເປັນຕົ້ນ ການລັກລອບເຂົ້າເມືອງຜິດກົດໝາຍ, ອາຊະຍາກຳຂ້າມຊາດ, ການກໍ່ອາຊະຍາກຳທາງໂທລະຄົມມະນາຄົມ, ການຄ້າມະນຸດ, ການຄ້າຂາຍເຖື່ອນ ແລະ ການຄ້າຂາຍສິ່ງເສບຕິດ ໂດຍຜ່ານທຸກກົນໄກທີ່ມີຢູ່ໃນປັດຈຸບັນລະຫວ່າງສອງປະເທດ. ນອກນັ້ນ, ຍັງໄດ້ຊຸກຍູ້ໃຫ້ຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ (GBC) ສືບ ຕໍ່ຈັດຕັ້ງປະຕິບັດກົນໄກການຮ່ວມມືຢ່າງມີປະສິດທິຜົນ ເຊັ່ນ: ການລາດຕະເວນຮ່ວມ, ການທັດສະນະສຶກສາ-ເຝິກອົບຮົມ ແລະ ສືບຕໍ່ວຽກງານການປັກຫຼັກໝາຍຊາຍແດນໃນຈຸດທີ່ຍັງຄົງຄ້າງໃຫ້ສຳເລັດໂດຍໄວເພື່ອຫຼີກລ່ຽງຊ່ອງວ່າງທີ່ກຸ່ມຄົນບໍ່ດີອາດສວຍໃຊ້.

ທ່ານ ພົອ. ອຸກຣິດ ບຸນຕານົນ ໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານປະທານສະພາແຫ່ງຊາດລາວ ທີ່ໄດ້ໃຫ້ການຕ້ອນຮັບການເຂົ້າຢ້ຽມຂໍ່ານັບຢ່າງອົບອຸ່ນ ພ້ອມກັບສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ສະພາແຫ່ງຊາດ ແຫ່ງ ສປປລາວ ທີ່ໃຫ້ການຮ່ວມມື ແລະ ສະໜັບສະໜູນ ໃນການຮ່ວມມືລະຫວ່າງສອງກອງທັບໄລຍະຜ່ານມາ ແລະ ຈະສືບຕໍ່ຊຸກຍູ້ການຮ່ວມມືລະຫວ່າງສອງປະເທດ ໃຫ້ເຂົ້າສູ່ລວງເລິກຍິ່ງໆຂຶ້ນ ເວົ້າລວມ, ເວົ້າສະເພາະ ກໍຄືການພົວພັນຮ່ວມມືລະຫວ່າງສອງກອງທັບ ໄທ-ລາວ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ; ພ້ອມນັ້ນ, ຍັງໄດ້ລາຍງານຜົນສຳເລັດການເຂົ້າຮ່ວມກອງປະຊຸມລະຫວ່າງຫົວໜ້າກົມໃຫຍ່ເສນາທິການກອງທັບປະຊາຊົນລາວແລະຜູ້ບັນຊາການທະຫານສູງສຸດ ແຫ່ງ ລາຊະອານາຈັກໄທ ຄັ້ງທີ 2 ອີກດ້ວຍ.




*#ບ່າວກະບື*

**ວັງ**ເລີກ ຖາມສາວຂາຍເຄື່ອງທີ່ເປັນເພື່ອນຂອງເຂົາວ່າ: "ເກດ, ບອກດູວ່ານ້ອງຮູ້ໄດ້ແນວໃດ ວ່າຄູ່ຍິງຊາຍທີ່ນ້ອງຂາຍເຄື່ອງໃຫ້ນັ້ນ ແຕ່ງດອງກັນ ຫຼື ພຽງແຕ່ທ່າທາວ່າແຕ່ງດອງກັນ?"

"ໂອຍ, ເລື່ອງນີ້ມັນງ່າຍປານປອກກ້ວຍປ່ອນໃສ່ປາກ. ຖ້າຍິງຊາຍຄູ່ໃດຊື້ເຄື່ອງດ້ວຍອາການຍິ້ມແຍ້ມແຈ່ມໃສ, ນ້ອງຮູ້ໂລດວ່າ ພວກເຂົາຍັງບໍ່ທັນແຕ່ງກັນເທື່ອ; ແຕ່ຖ້າພວກເຂົາທັງຊື້ທັງມີປາກມີສຽງຕໍ່ກັນແລ້ວ, ແນ່ນອນຄູ່ນັ້ນຕ້ອງແມ່ນຜົວເມຍກັນໂລດ" ເກດຕອບພ້ອມທັງຫົວ.

*#BAOKBU*

Vanglerk to his sales-girl friend: "Keth, tell me how do you know that the couples you sell your products to are married or just pretending to be married?"

"Oh, It's very simple. If a couple buys it smilingly, I know it is an unmarried one and if a couple buys it argumentatively, they are definitely married to each other" replied Keth laughingly.





## ນາງ ສູນທອນ...

(ຕໍ່ຈາກໜ້າ 1)

(ສພຊ) - ໃນລະຫວ່າງວັນທີ27-30ພຶດສະພາ2026, ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ໂຄສະນາເຜີຍແຜ່ຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ V ຢູ່ 2 ຈຸດຂອງເມືອງຊົນນະບູລີ ຄື: ເຂດຈຸດສຸມຕາແສງຕັ້ງຫວາຍ-ລຳຫວາຍ ແລະ ສະໂມສອນຂອງເມືອງໂດຍມີອຳນາດການປົກຄອງເມືອງ, ບ້ານ ແລະ ພໍ່ແມ່ປະຊາຊົນເຂົ້າຮ່ວມ.

ການລົງເຄື່ອນໄຫວຄັ້ງນີ້, ຄະນະໄດ້ຮັບຟັງການລາຍງານສະພາບລວມກ່ຽວກັບຜົນສຳເລັດການພັດທະນາເສດຖະກິດ-ສັງຄົມ ຈາກຄະນະກຳມະການປົກຄອງເມືອງ ແລະ ຈຸດສຸມຕາແສງຕັ້ງຫວາຍ-ລຳຫວາຍໃນແຕ່ລະຈຸດທີ່ລົງພົບປະ;ພ້ອມດຽວກັນ, ທ່ານຮອງປະທານສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ໄດ້ລາຍງານຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ແລະ ສພຂ ສະຫວັນນະເຂດ ຊຸດທີ V ໂດຍຫຍໍ້. ຫຼັງຈາກນັ້ນ, ຜູ້ມີສິດເລືອກຕັ້ງໄດ້ສະເໜີຄຳຄິດຄຳເຫັນ ທີ່ຢາກໃຫ້ມີການສ້ອມແປງເສັ້ນທາງໃຫ້ສາມາດທຽວໄດ້ສອງລະດູ, ຄົ້ນຄວ້າພິຈາລະນາໂຄງການກໍ່ສ້າງຕາຂ່າຍໄຟຟ້າເຂົ້າບ້ານທີ່ຍັງບໍ່ທັນມີໄຟຟ້າ, ສ້ອມແປງລະບົບຊົນລະປະທານ, ລະບົບສັນຍານໂທລະຄົມມະນາຄົມ, ປັບປຸງໂຮງຮຽນທີ່ມີຄວາມຊຸດໂຊມຫຼາຍ, ເພີ່ມເງິນອຸດໜູນປະທານບ້ານຕື່ມ ເພື່ອໃຫ້ສອດຄ່ອງກັບສະພາບເສດຖະກິດໃນປັດຈຸບັນ; ຜ່ານການຮັບຟັງຂໍ້ສະເໜີຕ່າງໆ, ບັນດາສະມາຊິກສະພາປະຊາຊົນແຂວງ ແລະ ຕາງໜ້າຫ້ອງການທີ່ກ່ຽວຂ້ອງຂອງເມືອງ ກໍໄດ້ຜັດປ່ຽນກັນຊີ້ແຈງ, ອະທິບາຍໃຫ້ຄວາມກະຈ່າງແຈ້ງໃນບັນຫາຕ່າງໆຢ່າງກົງໄປກົງມາ.

ໃນການພົບປະຜູ້ມີສິດເລືອກຕັ້ງຄັ້ງນີ້, ທ່ານ ນາງ ສູນທອນໄຊຍະຈັກໄດ້ກ່າວສະແດງຄວາມຊົມເຊີຍຜົນສຳເລັດໃນການພັດທະນາເສດຖະກິດ-ສັງຄົມຂອງເມືອງຊົນນະບູລີທີ່ຍາດມາໄດ້ໃນໄລຍະຜ່ານມາ, ຊົມເຊີຍຕໍ່ການປະກອບສ່ວນຢ່າງຫ້າວຫັນຂອງພໍ່ແມ່ປະຊາຊົນໃນການພັດທະນາທ້ອງຖິ່ນຕົນ ເຊິ່ງສະແດງອອກໃນການສ້າງລາຍຮັບເກີນແຜນ, ຈັງຫວະການຂະຫຍາຍຕົວຂອງເສດຖະກິດເພີ່ມຂຶ້ນ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ; ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ເນັ້ນໜັກໃຫ້ປະຊາຊົນ ກໍຄືອຳນາດການປົກຄອງແຕ່ລະຂັ້ນ ສືບຕໍ່ນຳໃຊ້ທ່າແຮງຂອງທ້ອງຖິ່ນຕົນ, ກຳນົດຈຸດສຸມໃນການພັດທະນາເພື່ອເສີມຂະຫຍາຍທ່າແຮງທີ່ມີຂອງເມືອງ ເພື່ອເຮັດໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ເປັນເຈົ້າການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃຫ້ເປັນຮູບປະທຳເທື່ອລະກ້າວ.

ໂອກາດລົງເຄື່ອນໄຫວເຮັດວຽກຢູ່ແຂວງສະຫວັນນະເຂດຄັ້ງນີ້, ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຍັງໄດ້ເດີນທາງໄປຢ້ຽມຢາມບໍລິສັດ ສຸກຮຸ່ງເຮືອງ ສະຫວັນນະເຂດ ຈຳກັດຜູ້ດຽວ ຕັ້ງຢູ່ເມືອງນອງ ເຊິ່ງເປັນບໍລິສັດທີ່ລົງທຶນໃສ່ຂົງເຂດປູກຕົ້ນໄມ້ກິນໝາກແລະສ້າງຕັ້ງໂຮງງານຫຸ້ມຫໍ່ເພື່ອສົ່ງອອກ, ຢ້ຽມຢາມໂຄງການໂຮງໄຟຟ້າພະລັງ ງານລົມສະຫວັນ 1 ຕັ້ງຢູ່ເມືອງພີນ; ພ້ອມນັ້ນ, ຍັງໄດ້ນຳເອົາອຸປະກອນການຮຽນ, ອຸປະກອນກິລາຈຳນວນໜຶ່ງ ມອບໃຫ້ແຕ່ລະຈຸດທີ່ໄດ້ໄປເຄື່ອນໄຫວ ລວມເປັນມູນຄ່າຫຼາຍກວ່າ 50 ລ້ານກີບ, ໄດ້ໄປເຂົ້າຮ່ວມເປັນປະທານພິທີມອບ-ຮັບໂຮງຮຽນປະຖົມບ້ານນາກອຍຫ້ວຍ (ບ້ານສາມັກຄີໄຊ) ເມືອງອາດສະພັງທອງ ທີ່ມີການສ້າງໂຮງຮຽນຫຼັງໃໝ່ບົນພື້ນຖານທຶນທີ່ລະດົມໄດ້ໂດຍສະມາຊິກສະພາແຫ່ງຊາດ ຊຸດທີ XI ທີ່ຜ່ານມາ.

**ຄະນະບັນນາທິການ**

ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ